
ພື້ນພຣະບາງ

ກະຊວງສຶກສາທິການ, ສິລປາກອນ ກິລາແລະຍຸວະຊົນ

ພື້ນພຣະບາງ

ກວດແກ້ ແລະ ຈັດພິມ

ໂດຍ

ຫໍສມຸດ ແຫ່ງຊາດ

ພິມຄັ້ງໜຶ່ງ

ເລກທີ ໑໙

×

× ×

ວຽງຈັນ, ຫໍສມຸດແຫ່ງຊາດ , ໑໙໖໙.

## ພື້ນ ພຣະບາງ

ນະໂມຕັດສະ ຖຸ ສິສວັດສະດີ ອັນນີ້ ຈັກກ່າວຕຳນານ ນິທານອັນຕັ້ງວັດ ແກ້ວ ແຕ່ປະຖົມທົວທີ ທີ່ນັ້ນ . ໃນເມື່ອພຍາຟ້າງຸ່ມ ຕົວແຂ້ວອອກ ແຕ່ ໃນທ້ອງແມ່ ມີມີ ເຫຼັ້ມນັ້ນ ເສນາອາມາດຣາຊມຸນຕຣີ ທັງຫຼາຍວ່າເປັນ ຄົນເຂັດ ຄົນຂວາງ ວ່າດັ່ງນັ້ນແລ້ວ ເອົາໄປໃສ່ແພໄຫຼເສັຽ ໄປຮອດ-ທ່າ ມະຫາປ່າສະມັນເຈົ້າ ພຣະອົງຈຶ່ງຖາມເຂົາທັງຫຼາຍ ອັນໄປດອນ ນັ້ນ ຮູ້ເຫດການທັງມວນແຈ້ງແລ້ວ ພຣະມະຫາເຖຣາເຈົ້າ ຈຶ່ງເອົາເຂົາ ທັງມວນ ເມື່ອຢູ່ດອນທີ່ນັ້ນ . ເທິງນານໄປ ພຍາອິນຖະປັດມະຄອນຫຼວງ ຮູ້ຂ່າວວ່າ ພຣະໄດ້ລູກເຈົ້າຊຽງດົງ ຊຽງທອງ ວ່າດັ່ງນັ້ນ ພຍານະຄອນ ຈຶ່ງໃຫ້ມາຂໍເອົານຳ ພຣະມະຫາປາສະມັນເຈົ້າ ເມື່ອລ້ຽງໄວ້ເປັນລູກ-ເມື່ອທ້າວໃຫ່ຽມາ ໄດ້ ໑໖ ປີ ກໍເອົາລູກສາວແຫ່ງຕົນ ຜູ້ຊື່ວ່າ ນາງ ແກ້ວລອດຟ້ານັ້ນ ໃຫ້ເປັນເມັຽ . ແຕ່ນັ້ນໄປພາຍໜ້າ ພຍາອິນຖະປັດ ມະຄອນຫຼວງເຈົ້າ ຈຶ່ງຍົກເອົາຣົພົນ ໃຫ້ມາສເວິຍຣາຊສົມບັດ ໃນຊຽງ ດົງ ຊຽງທອງ ກັບທັງນາງແກ້ວລອດຟ້າ ມາເປັນມະເຫສີ ຊື່ວ່າ ນາງ ເທພາຕະມະວິຊິຕະມະທີທິປະຕິ ຣາຊເທວີສອນທະປັດ ຣາຊບຸດຕຣີນັ້ນ-ເອົາບ້ານເມືອງທັງມວນໄດ້ແລ້ວ ມາສເວິຍຣາຊສົມບັດ ທີ່ຊຽງດົງຊຽງ ທອງ ທີ່ນັ້ນ . ຍາມນັ້ນ ສາສນາໃນເມືອງລ້ານຊ້າງ ກໍລືຊາປາກົດໄປ ຮຸ່ງເຮືອງຫຼາຍ ທຸກແຫ່ງຫົນ . ພຍາກັບນາງແກ້ວລອດຟ້າ ຈຶ່ງໃຫ້ໄປຂໍ-ເອົາສາສນາ ດອນພົຕົນ ທີ່ນະຄອນຫຼວງພູມ ເປັນຕົ້ນວ່າ ພຣະບາງເຈົ້າ

---

1. The name of the venerable.

ນະໂມຕັດສະ ຯ pay the homage to the Enlightenated One

ກັບມະຫາປາສະມັນເຈົ້າ ຜູ້ລ້ຽງຕົນໄທຍມານັ້ນ . ເມື່ອນັ້ນ ພຍາອິນຖະປັດ ມະຄອນຫຼວງ ຈຶ່ງໃຫ້ພຣະມະຫາປາສະມັນ ທັງສອງພີ່ນ້ອງ-ອັນນີ້ ຫາກແມ່ນເຊື້ອຊາດ ອິນຖະປັດມະຄອນຫຼວງ ມະຫາພະລະກາງເຈົ້າ ຕົນພີ່ ກັບທັງພຣະມະຫາ ເທພະລະກາງເຈົ້າ ຕົນທັງມະຫານິມປັນຍາເຈົ້າ ທັງສາມຕົນນີ້ ຫາກເປັນເຊື້ອຊາດ ເມື່ອລະກາງທີ່ຜູ້ມາ ກັບທັງພຣະບາງເຈົ້າ ແຕ່ລະກາງທີ່ພູ້ນ ພຣະມະຫາເຖຣະເຈົ້າທັງ ໕ ຕົນນີ້ ຮູ້ທັກ ມີປັນຍາມັກ ຮູ້ໄຕຍະພິດົກທັງ ມີ ຈົບເພດພາຍ-ນອກ ເປັນຕົ້ນວ່າ ທຸຣາຊາຕາທັງມວນ ກັບທັງພິກຂຸເຖົ້າ ມາດອມ ໕ ຕົນ ຈົວເນນ ໔ ຕົນ ມີພຣະມະປາສະມັນເຈົ້າ . ພຣະມະຫາເທພະລະກາງເຈົ້າ ເປັນປະທານ ທັ້ນແລ ຄົນພາຍນອກ ອັນເປັນຍາຕິພີ່ນ້ອງ ພຣະ ທັງ ໕ ມາດອມ ແຕ່ເມືອງມະຄອນຫຼວງພູ້ນ ນາຍສາຣະມະຄອນຊຸມນຶ່ງ ນາຍຊຽງເພົາຊຸມນຶ່ງ ອາຈານຍາມະນ້ອຍຊຸມນຶ່ງອາຈານ ທັມມະຈຸງວາຊຸມນຶ່ງ ອາຈານ ສຸເມທາຊຸມນຶ່ງ ນາຍສຸເພຊຸມ-ນຶ່ງ ນາຍຣາຫຸນຊຸມນຶ່ງ ນາຍໂພທາຊຸມນຶ່ງ , ເຂົາທັງຫຼາຍຝູງນີ້ ໕ ຮ້ອຍຄົວ ຫາກເປັນຍາດ ພຣະທັງ ໕ ຕົນ. ພຍາມະຄອນຫຼວງເຈົ້າໃຫ້ມາດອມ ຄົນອັນ. ພຍາມະຄອນຫຼວງ ໃຫ້ມາດອມກັບນາງແກ້ວລອດຟ້ານັ້ນ ຄື່ວ່າ ມໍຣະສົງຊຸມນຶ່ງ ມໍຣະສານຊຸມນຶ່ງ ມໍຣະມະຣາຍຊຸມນຶ່ງ ມໍຣະເດດຊຸມນຶ່ງ ເຂົາເຈົ້າທັງສີ່ຄົນນີ້ ຮູ້ຈັກຫຼັກຈົບເພດ ສາຕະສົນ ມົນດົນ ຊ່າງຄັວດ ຊ່າງລາຍ ຊ່າງແຕ້ມ ຊ່າງຂຽນ ຊ່າງຫຼໍ່ພຸທຮູບ

2 Mahalangka
3 None Buddhist Teaching



ເຈົ້າອົງລ້ານ ອົງແສນ ຈົບເພດທັງມວນ ມີຊຸມພີ່ນ້ອງ ເຂົາເຈົ້າມາດອມ ມີຄົນພັນນຶ່ງ ຊຸມນີ້ຫາກກັບແມ່ນົມ ນາງແກ້ວລອດຟ້າທັງມວນອັນມາດອມມໍຣະສົງ ມໍຣະສານ ມໍຣະຣາຍ ມໍຣະເດດ ທັງແມ່ນົມ ນາງແກ້ວລອດຟ້າ ອັນນີ້ເປັນຄົນຫຼວງ ອັນພຍາມະຄອນ ໃຫ້ມາໂລ້ມນາງ-ແກ້ວລອດຟ້າ. ພຍາມະຄອນຫຼວງເຈົ້າ ໃຫ້ເອົາພຣະບາງເຈົ້າ ກັບຄົນທັງຫຼາຍ ອອກມາໄຕຍະພິດົກທັງສາມ ກັບທັງຄົນທັງມວນມາພ້ອມພຣະມະຫາສະມັນຕະເຈົ້າ ທັງພ້ອມພຣະມະຫາເທພະລະກາງເຖົ້າ. ຄັນວ່າພຣະເຈົ້າພີ່ນ້ອງ ມາຮອດວຽງຈັນ ຢູ່ທັ້ນ ໗ ວັນ. ກໍເອົາພຣະບາງກັບທັງຄົນອອກມາທາງບົກ ຮອດວຽງຈັນຄ່ຳທັ້ນ ແລ້ວພຣະບາງເຈົ້າກໍບໍ່-ໄດ້ມາ ເຕດວ່າ ຍົກຍໍລົງໃດກໍບໍ່ໄດ້ ຈຶ່ງຖອດສາກວ່າ ພຣະບາງເຈົ້າຢູ່ທັ້ນກ່ອນ ກໍຈຶ່ງໄຫວ້ພຣະບາດເຈົ້າ . ເມື່ອນັ້ນ ພຣະມະຫາປາສະມັນເຈົ້າ ກໍເອົາພູ່ຊຸມຂົນມາທາງບົກ ຄັນວ່າຮອດພູ້ນຶ່ງເມືອງທັ້ນ ພຍາຟ້າ ກັບນາງແກ້ວລອດຟ້າ ກໍໄປລັບໄປໂຈມເອົາພຣະເຈົ້າພີ່ນ້ອງ ມາຕັ້ງຢູ່ທີ່ນຶ່ງ ຊື່ວ່າ ນາເຂົ້າຈ້າວທັ້ນແລ. ຈຶ່ງເອົາຕຳນານ ແຕ່ເມືອງ-ອິນຖະປັດມະຄອນຫຼວງ ມາອ່ານໃຫ້ຄົນທັງຫຼາຍຟັງວ່າ ເມືອງຊວາ-ລ້ານຊ້າງນີ້ ແຕ່ເຈົ້າຣະສີມາຂອດຫັກສີມາໄວ້ເບື້ອງເພື່ອ ເອົາພູຊ້າງນັ້ນເປັນນິມິດ ກ້ຳຕາວັນອອກ ເອົາພູຊ້ອງເປັນນິມິດ ທຳກາງເມືອງເອົາພູເຂົາກາເປັນນິມິດ ກ້ຳຫັກຂົນ ເອົາພູຊ້າງເປັນນິມິດ ຈຶ່ງໄດ້ຊື່-ວ່າ ເມືອງລ້ານຊ້າງ ອັນຊື່ວ່າ ເມືອງລາວນີ້ ຄົນທັງຫຼາຍອັນນາ-

ເປັນເຈົ້າເມືອງແຕ່ກ່ອນນັ້ນ ອອກໃນພາກນ້ຳເຕົ້າປູງ ມາເປັນທ້າວ ເປັນພຍາ ອັນເຂົາວ່າທ້າວຂູນລໍນັ້ນ ຈຶ່ງໄດ້ຊື່ວ່າ ລາວ ເມື່ອນັ້ນມາ ອັນວ່າ ລາວນັ້ນ ບາລີອະຖະ ແປວ່າ ພາກນ້ຳເຕົ້າປູງ ຫຼືຊູ ເສັຽ ພຸ້ນນັ້ນ ຫາກເປັນວ່າລາວ ອັນວ່າ ຄົນທັງຫຼາຍ ອັນເກີດໃນພາກນ້ຳ-ເຕົ້າປູງນັ້ນ ດ້ວຍອະຖະວ່າ ທະຣະຖັງລະອະຕີຕິ ລາກຸໂຍ ອັນນິ ຖະໂຣໂລ ອັນວ່າ ພາກເຄືອໄມ້ອັນໃດ ລະອະຕີລຸນາຕີ ກໍຕັ້ງເສັຽ ທະຣະຖັງຍັງອັນຮ້ອນ ອິຕິຕສມາ ຕັງວັນລິຖະລັງ ອັນວ່າ ພາກເຄືອ ໄມ້ອັນນັ້ນ ລາວຸ ນາມະຊື່ວ່າ ກັດຕຸຣຸປະກັດຕຸສາດ ໄດ້ພາກນ້ຳເຕົ້າ ປູງ ລາວຸ ຍັງຊາຕິຕິ ລາວຸ ໂອໂຍ ສັດຕະນິກາໂຍ ອັນວ່າ ຜູ້ສັດ-ຕົວໃດ ຈາຍະຕີກໍເກີດ ລາວຸ ຍັງໃນນ້ຳເຕົ້າປູງ ອິຕິຕສັມາ ໂສ ສັມມິຕິກາໂຍ ອັນວ່າ ສັດຕົວນັ້ນ ລາພຸໂຊນາມມະ ຊື່ວ່າ ໄດ້ຫຼຸ່ມ ອັນເກີດຢູ່ໃນນ້ຳເຕົ້າປູງນັ້ນ ອັນນີ້ຊື່ວ່າ ເມືອງຊວາ ນີ້ເປັນເຫດ-ຊາດເມືອງ ອັນໄດ້ຊື່ວ່າ ສູວັນນະພູມີ ເພາະວ່າພື້ນແຜ່ນດິນເຂດແດນ ເມືອງອັນນັ້ນ ມີຄຳມີເງິນ ມີແກ້ວມີເຫຼັກ ມີທອງມີກົວ ມີຊົມມີນ້ຳປາ ມາກພ້າ ຈຶ່ງໄດ້ຊື່ວ່າ ເມືອງຊວາ ດ້ວຍອະຖະວ່າຊາຍະຕີ ເອຕາຣະ ເຖຕິ ຊື່ວ່າ ສຸວັນນາທີວະຖັງ ອັນວ່າ ວັດຖຸອັນມີຄຳເປັນຕົ້ນ ຊາຕິຍາ ຕິ ກໍເກີດມີ ເອຕະຣະເຖໃນເມືອງໜີ້ ອິຕິຕສັມາ ຕັງຣະຖັງ ອັນວ່າ ໜີ້ນັ້ນ ຊານາມມະຊື່ວ່າ ອະທີຄະຣະສາດໃດ ເມືອງອັນນີ້ ຕຳນານ-ພຣະມະຫາປາສະມັນເຈົ້າ ວ່າດັ່ງນີ້ແລ້ວ ພຣະສັງຄະເຈົ້າທັງຫຼາຍຈຶ່ງ



ຖາມດູ່ວ່າ ພູມມະຣະທີ່ໃດ ພູນາງກາງລີ້ທີ່ໃດ ກົກທ່ອນທີ່ໃດ ຊຽງງານ ທີ່ໃດ ວ່າດັ່ງນັ້ນ ແຕ່ນັ້ນ ທາວພຍາພູ ອັນຮູ້ສືບສອງມາ ເຂົາເລົ່າກໍບອກ ອັນນຶ່ງ ພໍຊຽງແພງ ພໍເສນາເຂົາຄຳ ພໍຊຽງແກ້ວ ທັງພໍຫຼວງ ພໍນ້ຳທ່ຽວ ເຂົາທັງຫຼາຍຜູ້ງນີ້ ອັນເຂົາໄດ້ຈື່ໄດ້ຈຳ ແຜ່ນດິນດີ່ທັງມວນ ເຂົາກໍ-ບອກກໍເລົ່າ ແກ່ພຣະສັງຄະເຈົ້າ ມີມະຫາປາສະມັນເຈົ້າ ເປັນສັງຄະ-ເຖນ ທັງມວນນີ້ ຢູ່ຝ່າຍຂອກຟ້າພູ້ນ ພຣະສັງຄະເຈົ້າ ເລົ່າຖາມວ່າ: ຊຽງເຫຼັກທີ່ໃດ ຊຽງທອງທີ່ໃດ ຊຽງເພືອກທີ່ໃດ ຜາຕັດແກ່ທີ່ໃດ ຜາ ຕັ້ງນາຍທີ່ໃດ ສິບນ້ຳດົງ ແລະສິບນ້ຳໂຮບທີ່ໃດ ງ້ອນໂຮບເບື້ອງເພື່ອທີ່-ໃດ ພຣະສັງຄະເຈົ້າ ຖາມດັ່ງນັ້ນ ພຍາຟ້າຖີ່ມວ່າ ທີ່ຊຽງດົງ ຊຽງ-ທອງນັ້ນ ຜູ້ຂ້າກໍເຫັນບາດນີ້ ຖາມະທີ່ທັງຫຼາຍ ອັນພຣະມະຫາເຖຣະ-ເຈົ້າ ຫາກຖາມຫານັ້ນ ເຂົາພໍທັງຫຼາຍ ກໍບອກເລົ່າໄປຕາມອັນມີ ຊູ້ທີ່ຊູ້ ແຫ່ງຕາມຕຳນານ ເອົາມາແຕ່ນະຄອນຫຼວງ ມາອ່ານໃຫ້ ພຍາຟ້າ ກັບ ທັງມະຫາເສນາໜ້າ ກໍແມ່ນຕຳນານຊູ່ອັນ ພຣະມະຫາປາສະມັນ ຈຶ່ງກ່າວ ວ່າ ພຣະສັບພັນຍູເຈົ້າ ໂຄຕະມະ ເຮົາມາໄວ້ປ່າທະລັກຂະນະ ທີ່ງອນ ສິບຣິບ ເບື້ອງເພືອນຫັ້ນ ພຣະອໍຣະຫັນຕາເຈົ້າ ທັງ ໔ ຕົນ ຍັງໄວ້ຮອຍ ຕີນ ໔ ອັນ ທີ່ຫົວພູເຂົາກາຫັ້ນນັ້ນ . ແຕ່ນີ້ ເປັນຕຳນານບ້ານເມືອງທັງ ມວນ ກ່ອນວ່າ ເຮົາກໍເອົາຕຳນານ ແຕ່ນະຄອນຫຼວງພູ້ນມາອ່ານ ກໍ-ຫາກແມ່ນຊູ່ອັນ.

ບັດນີ້ມະຫາຣາດເຈົ້າ ຈັກໃຫ້ໂອກາດອະນຸຍາດ ແກ່ເຮົາສົ່ງ-

ໃດ ນັ້ນຈາ ພຍາຟ້າຈິ່ງກ່າວວ່າ ຂົງເຂດດົງລ້ານຊ້າງທັງມວນ ທີ່ໃດ
ກໍດີ ເປັນທີ່ຕັ້ງສາສນາ ໃຫ້ເຈົ້າກູຕັ້ງສາສນາ ໃນແຜ່ນດິນເມືອງລ້ານ
ຊ້າງນີ້ ກໍຂ້າເທົ້ນ ອັນນຶ່ງ ໄມ້ຈິງໄມ້ປ່ອງທັງມວນ ທີ່ໃດກໍດີ ເປັນທີ່-
ຄວນໃຫ້ເຈົ້າກູ ເອົາເທົ່າອັນເທົ້ນ ເທົ່າເວັ້ນໄວ້ ແຕ່ສວນອຸທິຍານທັງ
ມວນນັ້ນ ແລະໄມ້ນົງຂ້ານົງເມືອງ ທີ່ໃດກໍດີ ຢ່າໄດ້ເອົາລ່ຳກ່ວານັ້ນ
ໃຫ້ເຈົ້າກູເອົາເທົ້ນ ອັນນຶ່ງ ຄົນຜູ້ໃດກໍດີ ອາຖະຫຣາ ຜູ້ຂ້າກໍດີ ຜິດ
ຣາຊເທວີກໍດີ ຜິດເສນາອາມາດກໍດີ ຜິດຣາຊເທວີກໍດີ ຄວນຈັກຂ້າ
ນັ້ນ ເຂົ້າສອງມາເກີນເຂດແກ້ວທັງສາມ ໃນຂົງເຂດ ເຈົ້າກູຜູ້ຂ້າຂໍ-
ອະພັຍຊີວິດ ເຂົາທັງມວນກໍຂ້ານັ້ນ ເມື່ອນັ້ນ ພຣະມະຫາປາສະມັນເຈົ້າ
ຈິ່ງເອົາເຈົ້າຂຸນມູນ ນາຍທັງຫລາຍ ເປັນຕົ້ນວ່າ ມໍຣະສິງ ມໍຣະສານ-
ມໍຣະມະຣາຍ ມໍຣະເດດ ຊຸມນຶ່ງຍາຕິພຣະເປັນເຈົ້າທັງສີ່ນັ້ນ ມາຕັ້ງ-
ມາຕັ້ງທີ່ງອນສົບໂຮບກ້ຳເພີງ ທີ່ຕ່ຳນັ້ນບອກວ່າ ພຣະລັກຂະນະພຣະ
ໂຄຕະມະເຈົ້າເຮົາທັ້ນ ຜູ້ງໃດເປັນຄົນໂອນນາງແກ້ວລອດຟ້ານັ້ນພຣະ
ເປັນເຈົ້າ ກໍມອບໃຫ້ເມື່ອຢູ່ກັບ ດ້ວຍນາງທັງມວນທັ້ນ ເມື່ອພຣະມະ
ຫາປາສະມັນຕະວະມະ ວ່າເຈົ້າໄປຕັ້ງງອນສົບໂຮບນັ້ນ ເດືອນສອງ
ຂຶ້ນ ສາມ ຄ່ຳ ວັນເຈັດ ສັກຣາດ ໗໔໕ ພຣະເຈົ້າພົນອງ ຢູ່ທັ້ນທີກ
ວັນ ແລ້ວຈິ່ງເອົາລູກມະຫາໂພທິສດເຈົ້າ ເຊື່ອລະກາງທີ່ນັ້ນ ປູກໄວ້
ໃນທີ່ອັນຈັດຕັ້ງ ມະຫາເຈດີວິຫານ ທັ້ນກ່ອນ ປູກມະຫາໂພທັ້ນເດືອນ
໔ ຂຶ້ນເກົ້າ ຄ່ຳ ວັນ ໖ ເມື່ອນັ້ນ ວັນປູກມະຫາໂພທິເຈົ້ານັ້ນພຍາ



ຟ້າ ກັບທັງຣາຊເທວີ ທັງເສນາອາມາດ ຣາຊມູນຕຣີເສດຖີ ແລະພໍ່ຄ້າ
ແລະຊາວເມືອງທັງມວນ ກໍບໍ່ຢູ່ສັກກະຣະບູຊາ ໗ ວັນ ໗ ຄືນ ແຕ່ນັ້ນ
ມາ ເຖິງເດືອນທີກ ຂຶ້ນ ໗ ຄ່ຳ ວັນ ນຶ່ງ ສັກຣາດ ໗໔໖ ຈິ່ງຈັກກໍພຣະ
ມະຫາເຈດີທີ່ໄກ ປູກໄມ້ມະຫາໂພດ ພຣະມະຫາປາສະມັນເຈົ້າ ກໍເອົາ
ທາດກູ ຂ້ຳນີ້ເບື້ອງຂວາ ພຣະພຸທເຈົ້າ ກັບທັງແກ້ວ ມະນີໂຊດ ອັນ-
ພຍາມະຄອນຫລວງເຈົ້າ ໃຫ້ແກ່ພຍາຟ້ານັ້ນ ມາຄະບັນມະໄວ້ ກັບທາດ
ຖູກຂ້ຳນີ້ ພຣະສັບພັນຍູເຈົ້າ ຢູ່ນານໄດ້ສອງປີຖ້ວນ ສາມວັນ ຈິ່ງສ້າງ-
ວັດແກ້ວ ປີໃດແລ້ວປີນັ້ນ ນາງແກ້ວລອດຟ້າ ຈິ່ງເອົາແກ້ວມໍຣະກົດປູກ
ລູກນຶ່ງ ອັນມາກັບຕົນນັ້ນ ອະຄະບັນມະໄວ້ ອົກພຣະພຸທເຈົ້າອົງຫລວງ
ຈິ່ງໃຫ້ໄລມະເປັນທານ ອຸປະການແກ່ແກ້ວທັງສາມ ໃນທັ້ນນມາກໍໝາ-
ຈິ່ງໃຫ້ຂ້ອຍ ກັບຈັງທັນຊາວຄົນ ທັງໃຫ້ດິນບ້ານທີ່ເຂົາຢູ່ນັ້ນ ເລົ່າໃຫ້-
ຂ້ອຍ ກັບຄອງກອງ ໕ ຄົວ ຂ້ອຍ ແຕ່ງກວາດແຜ້ວ ທັງລັກສາເຂົ້າບູ
ຊາ ແລະເພີງທຽນ ອັນເປັນເຂົ້າບູຊາ ພຣະພຸທເຈົ້ານັ້ນ ໕ ຄົວ ທັງ
ໃຫ້ແມ່ມິນຕິນ ອັນນາພອນ ພຣະມະຫາປາສມັນເຈົ້າ ທັງຜູ້ທັງຊູມ-
ອັນເປັນຂ້ອຍຄົນ ແຫ່ງຕົນ ອັນມາຮອດທີ່ຕົນ ຢູ່ໃນຊຽງທອງ ເຊົ່າຢູ່
ທີ່ໃດກໍດີ ແວ່ຢູ່ທີ່ເມືອງແກ້ວໜ່ງ ຊື່ວ່າ ໂຄບໄພ ທີ່ແດນເມືອງທັ້ນ-
ເຈົ້າໝື່ນແກ່ ຈິ່ງໄດ້ດິນທີ່ໂຄບໄພນັ້ນ ແກ່ແມ່ນິ່ມທັ້ນ ກວ້າງພັນວາລວງ
ຍາວ ສອງພັນວາ ໃຫ້ແກ່ແມ່ນິ່ມ ລ້າງໄຮກະທຳນາກິນ ແຕ່ນັ້ນໝື່ນ-
ແກ່ ຈິ່ງໃຫ້ມາໄຫວ້ ພຍາຟ້າກັບນາງແກ້ວລອດຟ້າ ພຍາຈິ່ງວ່າ ເຈົ້າ-

ເຈົ້າໝື່ນແກ ໄດ້ໃຫ້ດິນເປັນບ້ານເປັນນາ ແກ່ແມ່ນິມເຣົາ ດັ່ງນັ້ນກໍຊອບ
ກໍຄວນແທ້ແລ້ວ ເຣົາກໍໄດ້ໃຫ້ທານແມ່ນິມເຣົາ ກັບທັງບ້ານທັງດິນທີ່ເຂົາ
ຢູ່ນັ້ນ ກັບທັງວັດແກ້ວທັງມວນ ຈິ່ງໄດ້ຊື່ວ່າບ້ານໄຜ່ແມ່ນິມ ກັບທັງວັດ
ແກ້ວ ຕັ້ງແຮກແຕ່ນັ້ນມາ ບ້ານເມືອງກວ້າງຂວາງດີໜັກ ສາສນາພຣະ
ພຸທເຈົ້າຮຸ່ງເຮືອງໄປດີນັກ ແຕ່ນັ້ນ ຜູ້ໃດມາເປັນເຈົ້າແຜ່ນດິນ ກໍໄດ້ໃຫ້
ທານບ້ານທານຄົນ ກັບທັງວັດແກ້ວທັງໃຫ້ອາຈານ ສີທິພຣະພອນແກ່ພຣະ
ມະຫາສາມີເຈົ້າສິ່ງດຽວ ແຕ່ນັ້ນ ວັດແກ້ວມາໄດ້ ໑໗ ປີ ພຍາສາມ-
ແສນໄທ ໄຕຍະພູວະນາຖາ ອັນເປັນລູກພຍາຟ້າ ສເວີຍຣາດໄດ້ປີນຶ່ງ
ຈຶ່ງສ້າງວັດມະໂນຣົມ ທັງຫຼໍ່ພຣະທອງ ເຈົ້າອົງຍັງບັດດຽວນີ້ ໃນວັດ-
ມະເນຣະຖະຫັ້ນ ພຣະເຈົ້າອົງນັ້ນ ຄັນລະນານໍ້າໜັກ ເຂົາຕອງທີນສີ-
ລາໄວ້ວ່າ ໄດ້ເກົ້າລ້ານເຈັດແສນ ດັ່ງນັ້ນ ພຍາສາມແສນໄທເຈົ້າ
ສເວີຍຣາດ ຈຶ່ງມາສ້າງວັດອຸໂປສົດ ເບື້ອງໜ້າວັດແກ້ວຫັ້ນ ວັດໃນ
ເມືອງຊວານີ້ ມີ ນີ ຫຼັງນີ້ກ່ອນ ເມື່ອພຍາສາມແສນໄທ ອະນິດຈະກັມ
ແລ້ວ ເຂົາຈຶ່ງໄປເຜົາ ທີ່ສວນແຖມຫັ້ນ ນາງເທວີກັບມູນມີທັງຫຼາຍ-
ເປັນຕົ້ນວ່າ ແສນລູກຈຶ່ງກໍ່ພຣະເຈດີຫຼັງນຶ່ງ ທັງສ້າງວັດຫຼັງນຶ່ງ ຈຶ່ງໄດ້
ຊື່ວ່າ ວັດສວນແຖມຫັ້ນ ແຕ່ນັ້ນສືບມາຫຼາຍທ້າວ ພຍາມະຫາກະສັດນັດ
ແລ້ວ ຈຶ່ງມາເຖິງ ພຍາໄຊຍະຈັກກະພັດຕິແຜ່ນແຜ້ວ ສເວີຍຣາດໄດ້-
໓ ປີ ຈຶ່ງມາສ້າງວັດກິ່ງແກ້ວ ໃຫ້ເປັນອັນໃຫຍ່ອັນຫຼວງ ເປັນເງິນ -
ເປັນຄຳທັງມວນ ມູງເປັນຫຼິບສະແກ້ວ ຫໍທັງຫຼັງວັດນັ້ນ ພຍາໄຊຍະ



ກະຕິພັດແຜ່ນແຜ້ວ ສ້າງທັງຫໍໄຕຍະປີດົກ ທີ່ກາງໜອງໜ້າວັດແກ້ວຫັ້ນ
ເອົາທັງໜັງສືທັມມະພຣະເຈົ້າ ປິກະຕະ ທັງ ໓ ເອົາມາແຕ່ເມືອງມະ
ຄອນຫຼວງມາໄວ້ຫັ້ນ ຈຶ່ງມາເຖຣາພິເສກ ພຣະມະຫາເທພະລະກາງ-
ເຈົ້າ ໃຫ້ເປັນພຣະມະຫາສາມີສີລະວິສຸທິ ອຸດຕະມະຈາຣິຍາມະອິເສ-
ສະອິໄຊຍະໄຕຍານ ປິຕະກະຄະຣະປະວະຣະເທພະລະກາງເຈົ້າ ໃຫ້
ເປັນເຈົ້າວັດແກ້ວ ພຍາໄຊຍະຈັກກະຕິແຜ່ນແຜ້ວ ເຈົ້າຈຶ່ງຕັ້ງປະນິທາ
ມະຄຳ ປາຖນາເຕີມ ອັນມັກອັນພຶງໃຈແຫ່ງຕົນຊູ່ອັນ ຈຶ່ງມາມີລູກຊາຍ
໕ ຄົນ ຄືວ່າ ພຣະເຈົ້າຊຽງລໍ ໑ ພຣະເຈົ້າແກມຄຳ ໑ ພຣະເຈົ້າ-
ອິຊຸມມະຣາຊາ ໑ ພຣະທ້າວເທພາ ໑ ພຣະຫຼ້າແສນໄຕ ໑ ແລ້ວເສົາ
ມີລູກຍິງນັ້ນ ຄືວ່າ ນາງມູງນາງຮູງ ໑ ນາງເກັດ ໑ ນາງຄຳ ໑ -
ນາງແກມ ໑ ນີ້ເປັນຍານາງທໍຂວັນ ນາງສີໄອຍະກາ ນາງໃຕຍມາໄດ້
໑໔ ປີ ແລ້ວອອກພາກສຸກຕາຍເສັຽ ເອົາມາເຜົາໃນວັດມະໂນຫັ້ນຈຶ່ງ
ມາສ້າງ ວິຫານຫຼັງນຶ່ງ ໃສ່ຊື່ວ່າ ວັດຊຽງກາງຫັ້ນ ຈຶ່ງໃຫ້ບ້ານເມືອງ
ອັນນັ້ນ ຢູ່ໄກ້ເມືອງສຸດ ຈຶ່ງໃຫ້ມະຫາ ເທພະລະກາງນ້ອຍ ເຈົ້າເຖ
ຣາພິເສກ ໃຫ້ມະຫາສັງຄະເສນາ ສາສນະພິຣົມ ອຸດຕະມະສາມີ ສີລະ
ວິເສສະເທພະລະກາງເຈົ້າ ໃຫ້ເປັນເຈົ້າວັດຊຽງກາງຫັ້ນ ຈຶ່ງໃຫ້ .
ທານເສດຖີ ໑໐ ຄົນທັງພູ່ຊູມລູກຫຼານທ່ານທັງມວນ ເມື່ອຢູ່ຄໍ້າຄູງວັດ-
ຊຽງກາງຫັ້ນ ພຍາໄຊຍະຈັກກະພັດຕິແຜ່ນແຜ້ວເຈົ້າ ແຕ່ງບ້ານແຜ່ງ
ເມືອງ ຊອບໂລກຊອບທັມດີນັກ ເສນາມຸນຕີ ໄພ່ທັງມວນຊື່ນບານມາກ

ໜັກ ຈຶ່ງໃຫ້ມາຕາ ດູຍັງຣິພົນທັງຫຼາຍ ນອນແຕ່ຊຽງຄານມາເພື່ອ ເທົ່າ
ຮອດສິບທ່າ ແຕ່ລາວທັງນອນ ໄດ້ທັກແສນ ຂ້າໄດ້ສອງແສນ ແຕ່ຊຽງ
ຄານ ໄປເທົ່າຊຽງສາ ແລະປານບ້ານດ່ານທັງນອນ ທັງເມືອງໄດ້ແກ່
ຄົນຫ້າແສນທັກພົ້ນ ແຕ່ນີ້ຮູ້ງໄປເທົ່າເຂດເມືອງນະຄອນທັງນອນໄດ້ຄົນ
ຫ້າແສນສີ່ພັນ ຊ້າງມ້າທັງນອນ ກໍຫາກມີກັບເຈົ້າຂຸນທຸກຄົນ ຍັງມີຊ້າງ-
ເຜືອກຕົວນຶ່ງ ເກີດໃນຂົງເຂດເມືອງບ້ານ ຊາວບ້ານມາເລົ່າແກ່ເຈົ້າ
ແຜ່ນດິນ ຈຶ່ງໃຫ້ພູ້ທ້າວແກ່ນ ລູກພົ້ນຊໍ້າຄໍາຮອມມາເອົາ ກໍໄດ້ເປັນຊ້າງ
ຮາຊອາມາດ ຊຽງດົງຊຽງທອງຫັ້ນ ໄດ້ຊັກໄນຍະຖອຍຄໍາ ແຕ່ຫຼັງຕໍາ
ນານ ອັນກ່າວມາດັ່ງນີ້ ເພື່ອໃຫ້ທ້າວພຍາທັງຫຼາຍ ໄດ້ສ້າງແປງວັດ
ແກ້ວ ໃຫ້ຮູ່ງເຮືອງໄປ ດັ່ງເມືອກອນນັ້ນ ເຫດວ່າ ທີ່ນັ້ນເປັນສີບ້ານສີ
ເມືອງລ້ານຊ້າງ ຊຽງດົງຊຽງທອງດີທີ່ ເລີຍສັງກາດ ໙໒໔ ເດືອນ
໗ ຂຶ້ນ ໔ ຄໍ່າ ວັນ ໖ ແສນຖຽງອາມາດໃຫ້ທານດິນ ແຕ່ປູ່ແຕ່ພໍ່ຕົນກັບ
ວັດແກ້ວ ວັນອັນພວກພຣະພຸທຮູບ ເຂົ້າວັດແກ້ວນັ້ນ ໄດ້ຫຼັ່ງນໍ້າພາຍ-
ທານ ຊ້ອງໜ້າພຣະສັງຄະເຈົ້າທັງຫຼາຍ ສົມເດັດພຣະສັງຄະຣາຊຄູເຈົ້າ
ໂຮງຄໍາ ສົມເດັດພຣະສັງຄະຣາດເຈົ້າກູຫຼວງ ສົມເດັດພຣະສັງຄະ-
ຣາດເຈົ້າ ອຸໂປສົດຫຼວງ ສົມເດັດພຣະສັງຄະຣາດເຈົ້າ ວິຊຸນຫຼວງ ມະ
ຫາເທວະຄູເຈົ້າ ເປັນປະທານພາຍນອກ ມີພຍາໂລກແລະ ສີເມືອງ
ທັງນອນ ແສນນັນທະອາເປັນປະທານ ອັນເປັນຖັກຄາຍ ສ້າງວັດແກ້ວ
ນັ້ນ ມີແສນກອາງ ໑ ແສນລູນ ໑ ໄດ້ແຈ້ງ ປາງສົມເດັດຣາຊມຸນຕີ



ມຸນຕີບຸຣີສີສຸຣະພີ ຊົ່ວເຈົ້າເປັນເຈົ້າວັດສົມເດັດ ສັງຄະຣາດເຈົ້າສຸທາ
ອາດ ເປັນມະວະກັນຕັດໄມ້ວັດ ສເນີເຈົ້າສ່ວນແຖນ ໃຫ້ທານດິນຜາ-
ຂາວ ກ້ອນດຽວນັ້ນ ອັນນີ້ ປາງພະອໍຣະປິດຕາທີຣາຊເຈົ້າ ສເວີຍຣາຊ
ແລ້ວ ອັນນີ້ ອາງພຣະບາງເຈົ້າເລີຍ ນະມະຖຸຊີມະຈະຣະປະຣະ ພຸທ
ບອນບາດ ຈັກກ່າວນິທານ ພຣະບູຮົມມະນາດເຈົ້າ ຕົນຊື່ວ່າ ຕະໂນ-
ມົນໃນຈໍາເຣີນສຸກຂະ ສານປະການຢ່າຄາດແຄ້ວ ຮອດວຽງແກ້ວ ຄື:
ອະຣະຫັນຕະເຈົ້ານັ້ນ . ດູລາເຈົ້ານັກປາດທັງຫຼາຍ ຕັ້ງແຕ່ພຣະພຸທ
ເຈົ້າ ສະເດັດເຂົ້າສູ່ນິຣະພານ ຄື ປະຖະໂນກຂະມະຫານະຄອນ ນິ
ຣະພານໄປແລ້ວ ໄດ ໔໖໘ ວັດສາຍັງມີອໍຣະຫັນຕາ ຕົນນຶ່ງ ຊື່ວ່າທຸ
ຣະມະຄະເຖນ ຢູ່ໃນລັງກາທີບພູ້ນ ກໍຣໍ່າເພິງເຖິງຄຸນພຣະພຸທສາສນາ
ເພື່ອຈັກໃຫ້ເປັນຮາວະຣະພົ້ນຄົງ ໄປຕາບຕໍ່ເທົ້າ ຫ້າພັນວັດສາເພື່ອ-
ຈັກໃຫ້ເປັນ ທິຕະປໂຍດແກ່ຄົນ ແລະເທພດາທັງຫາຍ ກໍຈຶ່ງແບ່ງ-
ພຣະພຸທເຈົ້າອົງນີ້ ອັນມີສະຖານອາການດັ່ງ ເມື່ອພຣະພຸທເຈົ້າຍັງ
ທິວຣະມານໄປຫ້ານ ຍັງຍາດທັງຫາຍ ຄື່ວ່າ ຊາວເມືອງກະບິນລະວັດ
ຖຸນະຄອນນັ້ນ. ຊາວເມືອງໂກຊິຍະນະຄອນ ອັນຕັ້ງຣິພົນສັກກຸຣະໂຍ
ທານາຣົບກັນແທ້ ຝັ່ງນໍ້າໂຣຫີນີດ້ວຍເຫດ ອັນຊີງກັນເອົານໍ້ານານັ້ນ -
ຄັນມະຫາເຖນເຈົ້າແບ່ງແລ້ວ ເມື່ອຈັກຫຼັ່ນຄົນແລະເທວະດາທັງຫຼາຍ
ຕ່າງຄົນຕ່າງນໍາເອົາມາຍັງເງິນ,ຄໍາແລະທອງອັນເປັນຂອງແທ່ງຕົນ-
ມາກັ່ນພາ ຕ່າງຄົນຕ່າງຂໍອາເອົາຂອງຫູຂ້າໃສ່ດ້ວຍແດ່ ວ່າດັ່ງນັ້ນ ມະ

ທາເຖຣະເຈົ້າ ຈຶ່ງຕັດພອນເອົາຍັງວັດຖຸ ແຫ່ງຄົນແລະເທວະດາທັງຫຼາຍ ຄົນໃຫຍ່ແລະນ້ອຍ ຄື່ວ່າ ເອົາທອງສ່ວນນຶ່ງ ເອົາຄຳສ່ວນນຶ່ງ ມາໃສ່-ເຂົ້າກັນ ໃນເບົ້າລູກດຽວ ຂຽວເປັນນ້ຳດ້ວຍກັນ ແລ້ວຫຼໍ່ໃຫ້ເປັນຮູບພຣະເຈົ້າອົງດີ ເຫດດັ່ງນັ້ນ ຄົນທັງຫຼາຍ ຈຶ່ງເອົາປະວັດນິມິດ ອັນຄົນແລະເທວະດາທັງຫຼາຍ ມາຂໍ ໃຫ້ເອົາຂອງຕົນໃສ່ ປາງແຕ່ນັ້ນ ລວດກົດໝາຍ ຊຶ່ ພຸທຮູບເຈົ້າອົງນີ້ວ່າ ພຣະບາງ ເພື່ອອັນແລ ໃນລະຍະນຶ່ງ ກໍຍາເອົາ-ວັດຖຸແລອື່ນ ແລະທອງນັ້ນ ຊື່ວ່າ ພຣະບາງ ກໍທາກເປັນໂອຫານ ແຕ່-ຊາວລະກາງທີບ ພູມມາແລ ຄັນຫຼໍ່ແລ້ວ ໃຫ້ຂັດສີດີບໍຣະສຸດ ຍັງພຸທຮູບ-ເຈົ້ານັ້ນ ກໍຕັ້ງໄວ້ ເພື່ອອາສນາ ອັນດີແລ້ວ ກໍແຕ່ງເຄື່ອງສັກກະຣະບູຊາ ກະທຳພຸທາພິເສກນັ້ນ ຄົນທັງຫຼາຍ ມີພຍາລະກາງທີບ ເປັນປະທານ, ເທວະດາທັງຫຼາຍ ມີພຍາອິນເປັນເຄົ້າ ຊາວທັງຫຼາຍ ມີຈຸງອານະຄະເຖນເຈົ້າ ເປັນປະທານ ກະທຳສັກກະຣະບູຊາມາກ ເຖິງ ໆ ວັນ ໆ ຄືນ ເມື່ອກະທຳມຸດທາ ພິເສກນັ້ນ ຈູງອານະຄະເຖຣະເຈົ້າ ກໍອາຣາທນາ ສາຣີຣະກະທາດ ພຣະສັບພັນຍູ ປະມານ ໕ ລູກ ໃສ່ໃນພຣະອູບແກ້ວ - ແລ້ວຕັ້ງໄວ້ເພື່ອໄຕຄຳ ກໍໃຫ້ຄົນທັງຫຼາຍ ນຳມາໄວ້ທີ່ຊອງພາ ພຸທຮູບເຈົ້າ ແລ້ວຈຶ່ງມີຄຳອະທິຖານວ່າ ພຸທຮູບອົງນີ້ຍັງຈັກຕັ້ງຢູ່ ໃຫ້ເປັນທີ່ຕະປະໂຍດ ແກ່ຄົນ ແລະເທວະດາທັງຫຼາຍ ໄປຕາບຕໍ່ເທົ້າ ໕ ພັນວັດສາ ແທ້ ດັ່ງນັ້ນ ຂໍໃຫ້ພຣະສາຣີຣະກະທາດເຈົ້າທັງ ໕ ລູກນີ້ ເຂົ້າຢູ່ໃນຕົນ ພຸທຮູບອົງນີ້ເທີ້ນ ຄົນວ່າມະຫາເຖຣະເຈົ້າ ອະທິຖານດັ່ງນີ້ແລ້ວ ທາດ



ລູກນຶ່ງ ກໍສະເດັດເຂົ້າໄປໃນໜ້າຜາກ ລູກນຶ່ງກໍສະເດັດເຂົ້າໄປໃນຄາງ ລູກນຶ່ງກໍສະເດັດເຂົ້າໄປໃນທ້ອງອົກ ລູກນຶ່ງກໍສະເດັດເຂົ້າໄປໃນມືກ້ຳ-ຂວາ ລູກນຶ່ງກໍສະເດັດເຂົ້າມືກ້ຳຊ້າຍ ແລ້ວກໍກະທຳຣິດທິປະຕິຫານເປັນອັສຈັນ ແກ່ຄົນແລະເທວະດາທັງຫຼາຍ ປາງນັ້ນດີຫຼີແທ້ ຕັ້ງແຮກແຕ່ກາລາບັດນັ້ນມາ ພຸທຮູບເຈົ້າອົງນີ້ ຕັ້ງຢູ່ເປັນທີ່ສັກກະຣະບູຊາໃຫ້ແລ້ວ ດັ່ງຄຳນັກ ຄຳປາຖນາ ແຫ່ງຄົນແລະເທວະດາທັງຫຼາຍ ໃນລັງກາທີບພູ້ມ ນານປະ-ມານອະຕີຕະສາສນາ ໄດ້ພັນປາຍ ສອງພັນວັດສາກໍມີແທ້ຈິງ ເຈຣິຣະ-ການ ນານແຕ່ນັ້ນມາ ເຖິງທຸຣະລັງກາດໄດ້ ໘໑໗ ຍາມນັ້ນ ຍັງມີພຍາຕົນນຶ່ງ ຊື່ວ່າ ສຸບິນະຣາດ ກໍສເວີຍສິສັມປັດ ໃນລັງກາທີບພູ້ມ ເລົ່າຍັງມີພຍາຕົນນຶ່ງ ຊື່ວ່າ ສີຣິຈຸນທະສເວີຍສິສັມປັດ ໃນເມືອງອິນທະປັດມະຄອນຫຼວງ ໃນຊຸມພູທີບ ເຮົານີ້ ພຍາທັງແພງຕໍ່ກັນກັບໝາ ເມື່ອນັ້ນ ພຍາສີຣິ-ຈຸນທະ ກໍຮູ້ຂ່າວວ່າ ພຣະບາງນີ້ສັກສິດນັກ ຍ່ອມໃຫ້ແລ້ວ ຍັງຄຳນັກຄຳປາຖນາ ແຫ່ງຄົນ ແລະເທວະດາທັງຫຼາຍ ເຫຼົ່ານັ້ນ ແລ້ວກໍຈຶ່ງໃຫ້ຣາຊະ-ທູຕາ ໄປຂໍເອົາ ດອນພຍາສຸບິນນະຣາດ ສະຫາຍຕົນ ເມື່ອນັ້ນ ພຍາລັງກາ ກໍໃຫ້ສົ່ງພຣະບາງ ອອກລາກລັງກາທີບພູ້ມ ມາດ້ວຍສະເພົາ ໃນຊຸມພູທີບ ກໍມາຮອາມາເຖິງ ເມືອງອິນຖະປັດມະຄອນຫຼວງ ໃຫ້ເປັນທີ່ສັກກະຣະບູຊາແລ້ວດັ່ງຄຳນັກຄຳປາຖນາ ແຫ່ງຄົນແລະເທວະດາທັງຫຼາຍ ໃນຊຸມພູທີບເຮົານີ້ເດ ແຕ່ນັ້ນມາແລ້ວ ປຸນະນິທານີຖິຕັງ...........

ຍັງອັບປ່າຣະນິທານ ນັກປາດເພິ່ງຮູ້ສັນນີ້ ເລົ່າໂສດຈຸນ ສັງກາດ

໖໗໒ ປີ ຮ້ອຍສີ່ພັນປີ ມີກຸມມານຜູ້ນຶ່ງ ເກີດມາເປັນລູກຊາຍຂຸນຜີຟ້າ. ອັນວົງສາບໍຣິມະບຸດຕານັດຕາ ແຫ່ງຂຸນບູຣົມຣາຊາທິຣາດ ຕົນສເວີຍສິ ສົມບັດ ໃນເມືອງຊວາ ອັນເປັນອານະຣະສັດຕະທຸດ ໄທວ່າເມືອງລ້ານ ຊ້າງ. ຣາຊກຸມມານຕົນນັ້ນ ອັນຍາດທັງຫຼາຍຜາຍຊື່ວ່າ ທ້າວຟ້າງູ່ມສ່ວນ ອ່າທ້າວຟ້າງູ່ມນີ້ ເມື່ອໄດ້ເປັນພຍາແທນວົງສາຕົນຢູ່ດັ່ງນັ້ນ ເສນາອາ- ມາດທັງຫຼາຍ ກໍປຶກສາພິເສກຣາຊນາມມະກອນວ່າ ພຍາຟ້າຫຼ້າທໍຣະນີສີ ສັດຕະນາຄະນາທຸດ. ດ້ວຍແທ້ພຍາຟ້າຫຼ້າຕົນນີ້ ກໍບໍ່ຕິຖານຄຸຍເຄີຍພັກ- ກັບດ້ວຍ ພຍາແກກະຣາດ ຕົນສເວີຍສົມປັດຕິ ໃນອິນທະປັດມະຄອນ ຫຼວງ. ເຫດວ່າ ພຍານະຄອນຫຼວງ ໃຫ້ຍັງຣາຊທິດາ ແກ່ພຍາຟ້ານັ້ນ. ຍາມນັ້ນ ພຍາກໍຂໍຣາຫນາ ເອົາພຣະບາງເຈົ້າ ໄວ້ໄຫວ້ນົບຄົບບູຊາ- ນັ້ນ. ພຍານະຄອນຫຼວງ ກໍອະນຸຍາດ ແກ່ພຍາຟ້າ ກໍຣາຫນາພຣະ- ບາງເຈົ້າ ກັບທັງພຣະມະຫາ ເຖຣະເຈົ້າ ດອນຕົນນຶ່ງ ຊື່ວ່າ ມະຫາ ປາສະມັນ ກັບທັງເຈົ້າພິກຂຸ ໔ ຕົນ ເນນ ໓ ຕົນ ພ້າຂາວດາວບົດ ນັກປາດຣາຊບັນດິດ ກັບທັງຄະທັດ. ຢູ່ເພື່ອສືບທອຍໂຮບທັ້ນ ແລ້ວກໍ ຈຶ່ງປູກໄມ້ ສີມະຫາໂພທິ ອັນເອົາມາກັບຕົນນັ້ນ. ກໍຢູ່ເປັນເຄົ້າເຈົ້າ ສາສນາ ໃນເມືອງລ້ານຊ້າງປາງນັ້ນ ທີ່ນັ້ນ. ຄົນທັງຫຼາຍລວດກົດຊື່ວ່າ ວັດແກ້ວ ຕາມນະມະບັນຍັດຕິ ແຫ່ງມະຫາເຖຣາເຈົ້າ ຕົນສ້າງແປງ- ນັ້ນ. ທຳນ້ອຍແຕ່ນັ້ນມາ ຍັງມີເນື່ອນຶ່ງ ຊ້າງພຍາວຽງ ກໍສັບມັນບໍ່ປ່ອຍ ໄປ ແລ້ວກໍໄປມ້າງໄປແທງວັດ ທີ່ພຣະບາງເຈົ້າຢູ່ເສັຽ. ແລ້ວກໍເຂົ້າໄປ



ຈັດໄມ້ແທງ ແທງພຣະເຈົ້າດັ່ງນັ້ນ. ພຣະບາງເຈົ້າ ກີງຕົກແທ່ນແຂນ ພຣະເຈົ້າກ້ຳຊ້າຍນັ້ນ ລວດຂົດແຕບ ເຂົ້າມາຂວານອ້ຍນຶ່ງ. ປາງນັ້ນ ແລ້ວ ສ່ວນດັ່ງຊ້າງຕົວນັ້ນ ມັນຊໍ້າເລົ່າອອກໄປ ກໍເຂົ້າໄປໃນປ່າພູມ. ຍາມນັ້ນ ຍັງມີຊ້າງປ່າຕົວນຶ່ງ ເຂົາກໍພົບກັນ ແລ້ວເຂົາກໍເລົ່າຊົນກັນ. ຊ້າງປ່າຕົວນັ້ນ ກໍແພ້ຊ້າງບ້ານ ກໍເຊຕົກລົງເຫວທີ່ນຶ່ງ ລວດຕາຍໄປ ໃນເຫວທີ່ນັ້ນ. ເປັນສະນິຖິກັນ ແຫ່ງຊ້າງຕົວນັ້ນ. ຍາມນັ້ນຄົນທັງຫຼາຍ ຢູ່ໃນເມືອງລ້ານຊ້າງ ກໍບັງເກີດອັສຈັນ ວິດແຕ່ສົມພານພຣະບາງເຈົ້າ ນັ້ນມາກໍພາກັນແລ. ພາຍລູນແຕ່ນັ້ນມາ ພຍາຟ້າກະທຳສຸຈຣິດ ຜິດຮີດ- ບ້ານຄອງເມືອງດັ່ງນັ້ນ ເສນາອາມາດ ກັບຊາວບ້ານຊາວເມືອງ ທັງ ຫຼາຍ ພ້ອມກັນແລ້ວ ກໍຂັບພຍາຟ້າ ໜີຈາກພາກເມືອງລ້ານຊ້າງໄປ ກໍ ມີ. ເມື່ອນັ້ນ ພຍາຄຳຕັນທີ່ເມືອງກາງຂວານັ້ນຜູ້ມ ໃນປີກາເພົ້າ ສັງ- ກາດ ຕົກແທ່ນແຂນ ພຣະເຈົ້າກ້ຳຊ້າຍນັ້ນລວດຂົດ. ສັງກາດໄດ້ ໗໓໕ ຕົວນັ້ນ ເຂົາເອົາລູກຊາຍພຍາຟ້າຜູ້ນຶ່ງ ຊື່ວ່າທ້າວອູ່ນເຮືອນ ອັນມາໄດ້ ໑໗ ເຂົ້າ ຕົນໃຫ້ເປັນພຍາແທນພໍ່ຕົນ ແລ້ວກໍອຸດສາຣາຊພິເສກນາມະ ກອນ ຊື່ວ່າ ພຍາສາມແສນໄທໄຕພູວະນາດ ອິປັດຕິສີສັດຕະນາຄະນາ ທຸດ ຢູ່ສເວີຍລິສົມປັດຕິ ອັນປະກອບຊອບທັມມາກັນ ນານປະມານວ່າ ໄດ້ ໔໓ ວັດສາ ຕາບຕໍ່ເທົ້າ ອາຍຸແຕ່ຊາດບາໄດ້ ໖໐ ທັດ ກໍເຖີງ- ອະນິດຖາ ໄປຕາມກັມແຫ່ງທ່ານນັ້ນເອງ. ບັດນັ້ນ ທ້າວລ້ານຄຳແດງ- ພຍາສາມແສນໄທ ກໍໄດ້ສເວີຍແທນພໍ່ຕົນ ຢູ່ນານປະມານໄດ້ ໑໗ ປີ

ກໍຈຸດຕິໄປຕາມກົມທ່ານນັ້ນ, ບັດນັ້ນ ທ້າວພິມມະທັດ ລູກພຍາລ້ານຄໍາ
ແດງ ກໍສເວີຍຣາດແທນພໍ່ຕົນ, ໄດ້ສິບເດືອນກໍຕາຍໄປ. ເລົ່າຖັດນັ້ນພຍາ
ປາກຢໍາ ລູກພຍາສາມແສນໄທ ເປັນພຍາແທນເລົ່າໄດ້ ໕ ເດືອນກໍ-
ຕາຍເສັຽ.ຖັດນັ້ນ ພຍາເພິ່ມໄສ ລູກພຍາສາມແສນໄທ ເປັນພຍາແທນ
ເລົ່າໄດ້ ໖ ເດືອນກໍຕາຍເສັຽ.ຖັດນັ້ນ ພຍາໄຄ ລູກຟ້າຄຳ ຫຼານສາມ
ແສນໄທ ເປັນພຍາແທນ ເລົ່າໄດ້ ນໍ່ ປີຕາຍເສັຽ.ຖັດນັ້ນ ທາວຊຽງ-
ສາລູກນາງນ້ອຍອ່ອນ ເມັຽສາມແສນໄທ ກໍໄດ້ເປັນພຍາແທນເລົ່າໄດ້
ນໍ່ ປີກໍຕາຍເສັຽ.ຖັດນັ້ນ ທ້າວຍູຄອນ ລູກລ້ານຄໍາແດງ ຫຼານສາມແສນ
ໄທກໍໄດ້ເປັນພຍາແທນ ເລົ່າໄດ້ແປດເດືອນ ກໍຕາຍເສັຽ.ຖັດນັ້ນ ທ້າວ
ຄໍາເກີດ ເປັນລູກລ້ຽງມະຫາເທວີ ເປັນພຍາແທນເລົ່າໄດ້ ໔ ປີກໍຕາຍ
ເສັຽ.ແຕ່ນັ້ນມາເຖິງທ້າວລືໄຊ ລູກພຍາສາມແສນໄທ ທີ່ເກີດໃນປີຣັບ-
ມິດ (ມະເມ) ສັງກາດໄດ້ ໗໗໗ ຕົວນັ້ນ ເຈົ້າໃຫ່ຍມາໄດ້ ໔໓ ປີ ກໍ
ໄດ້ເປັນພຍາ ສືບວົງສາພໍ່ຕົນ.ເລົ່າເມື່ອນັ້ນ ເສນາອາມາດ ກໍອຸພິເສກ
ນາມວ່າ ພຍາໄຊຍະຈັກກະພັດແຜ່ນແຜ້ວ ສເວີຍຣອຊົມປັດຕິ ຢູ່ໃນຊຽງ
ທອງ ລ້ານຊ້າງ ເຈັຽຣະການ ນານພັກແລ້ວ.ເຈົ້າກໍຈິ່ງຣໍ່າເພິງເຖິງ
ຄຸນ ພຣະບາງເຈົ້າມາກັພາ ກໍຈິ່ງໃຫ້ໄປຣາທນາ ເອົາແຕ່ເມືອງຊຽງ
ຄໍ່າ ພູ້ນມາ .ເພື່ອຈັກໃຫ້ເປັນທີ່ໄຫວ້ນົບ ຄົບບູຊາ ແກ່ຄົນແລະເທວະ
ດາທັງຫຼາຍ ໃນເມືອງຫຼວງຣາຊທານີ.ຄັ້ງນັ້ນ ຄົນທັງຫຼາຍ ກໍໄປ-
ຣາທນາ ພຣະບາງເຈົ້າໃສ່ໃນເຮືອ ແລ້ວຂຶ້ນມາແກ້ງຈັນທັ້ນ.ເຮືອພຣະ



ທັ້ນ ເຮືອພຣະບາງເຈົ້າ ກໍລອດລົ້ມຈົມເສັຽ.ຄົນທັງຫຼາຍຄືນມາເລົ່າ
ແກ່ພຍາ ໄຊຍະຈັກກະພັດຕິວ່າ ເຮືອພຣະບາງລົ້ມເສັ້ຽແລ້ວ, ແມ່ນພຣະ
ບາງເຈົ້າ ກໍຈົມເສັຽ.ເມື່ອນັ້ນ ພຍາກໍມີຄໍາຄຶງໃຈວ່າ" ໂອນໍ ອັນນີ້
ບູນຍະສົມພານເຮົາທາກນ້ອຍ ກໍບໍ່ເຄີນໄດ້ໄຫວ້ນົບ ເຄົາຣົບບູຊາຣັກ
ສາ ພຣະບາງເຈົ້າ ແທ້ດີຫຼືນາ". ອັນນຶ່ງ ຣ້ອຍວ່າຈັກເປັນອຸບາດອົນ
ຕາຍ ແກ່ບ້ານແທ່ງເຮົາ ພາຍໜ້າອັນຊະລີ.ພຍາຣໍ່າເພິງດັ່ງນີ້ແລ້ວ-
ລອດບໍ່ໃຫ້ເປັນໂທດ ເປັນໂພຍແກ່ຜູ້ໃດຜູ້ນຶ່ງເລີຍ.ເມື່ອນັ້ນ ເທວະດາ
ກໍເອົາພຣະບາງ ອອກຈາກນ້ຳທັ້ນ, ແລ້ວກໍເອົາໄປທອດໄວ້ ທີ່ອັດ-
ແທ່ນ ຄືເກົ່າ.ພຣະບາງເຈົ້າ ຢູ່ໃນວຽງຄໍາພູ້ນດັ່ງເກົ່າ.ໃນຣາຕີຄືນ
ອັນນັ້ນ ເທວະດາມາສັງທອນ ແກ່ກອນວັດໃຫ້ຝັນວ່າ ພຣະບາງເຈົ້າ
ມາຢືນຢູ່ເທິງທີ່ແທ່ງນັ້ນ ກ່າວວ່າ" ດູລາທ່ານກອນວັດ ກູພັດຄືນມາຢູ່
ດອນນີ້ງນີ້ແລ້ວ.ຍາມນັ້ນກອນວັດສະດຸ້ງຕື່ນ ມັນຄຶງໃຈວ່າ ມີຄໍາວ່າ
ອົນຕາຍອັນໃດ ເກີດມີແກ່ພຣະບາງເຈົ້າອັນຊະລີ.ຮູ້ວ່າພຣະບາງເຈົ້າ
ໜີຄືນມາດັ່ງນັ້ນ ກູຝັນນີ້ອັນຊະລີ.ມັນຄຶງດັ່ງນີ້.ຄົນຮູ້ງເຊົ້າ ມັນກໍຣີບ
ຊໍາຣະເນື້ອຕົນມັນດີແລ້ວ.ກໍຈິ່ງໄຫວ້ພຣະເຈົ້າໃນພູ້ນ.ມັນກໍຈິ່ງເຫັນພຣະ
ບາງເຈົ້າໃສຍາດ ຢູ່ເໜືອແທ່ນທັ້ນ.ມັນຈິ່ງຣີບໄປໄຫວ້ ມະຫາເຖຣະ
ເຈົ້າໃນກຸຕິ ແລ້ວເລົ່າເມືອບອກແກ່ພຍາ ຕົນເປັນເຈົ້ານັ້ນ.ເມື່ອນັ້ນຄົນ
ທັງຫຼາຍ ຈຶ່ງມາກະທໍາ ສັກກະຣະບູຊານາກັພາ.ແລ້ວກໍຈິ່ງປຸກ ຈິ່ງຍໍພຣະ
ບາງເຈົ້າຕັ້ງໄວ້ດັ່ງເກົ່າ.ແລ້ວກໍບັງເກີດອັສຈັນແກ່ຄົນທັງຫຼາຍຜູ້ງໃນ-

ລ້ານຊ້າງຝາງນັ້ນມາກໜ້າ. ຈຳພ່າຍແຕ່ນັ້ນມາໄດ້ ມີ ປີ ເມື່ອຈຸນສັງກາດ
ໄດ້ ໘໔໑ ປີກໍດີ, ໄດ້ແກ້ວຫອງເມືອງບົວເອົາ ອັນວ່າ ພິມລັກກຸມໂຍທາ-
ອານາດ ມາມ້າງເມືອງລ້ານຊ້າງເສັຽ, ປາງນັ້ນ ພຍາໄຊຍະຈັກກະພັດດີ
ກໍພີຈາກເມືອງຫຼວງ ຣາຊທານີ ໄປຢູ່ຊຽງຄານພູ້ນ, ມຽ່ນເສິກແລ້ວ ລວດ
ສະຊີວິດເຫ່ງຕົນ ໄປຕາມກັມທ່ານ ໃນເມື່ອປີນັ້ນ. ເມື່ອນັ້ນເຈົ້າສຸວັນນະ
ບັນລັງ ໄຫ່ວ່າພຍາແທ່ນຄຳ ຕົນເປັນລູກຈື່ງສັ້ງການ ແລ້ວກໍສ້າງມະຫາ
ວິຫານຫຼວງວາດໄວ້ໃຫ້ທານ, ກະທຳບຸນໄປຫາ, ລວດປາກົດວ່າ ວັດຊຽງ-
ຄານ ຕາບຕໍ່ເທົ້າ ກະລະບັດນີ້. ເມື່ອນັ້ນ ເສນາອາມາດທັງຫຼາຍ
ກໍອະພິເສກ ເຈົ້າສຸວັນນະບັນລັງ ເປັນພຍາແທນພໍ່ຕົນ ແລ້ວຈື່ງນຳແຕ່
ເມືອງຊຽງຄານພູ້ນ ຂຶ້ນມາຮອດເມືອງຫຼວງ ຣາຊທານີແລ້ວ ກໍສ້າງແປງ
ຊຽງດົງ ຊຽງທອງ ຢູ່ສືບປະເພນີພໍ່ຕົນ ດັ່ງເກົ່າ ເລົ່ານານປະມານ
ວ່າໄດ້ ໗ ປີ ກໍອະນິດຈະກັມ ເຖິງຕົນທ່ານ ພາຍຫຼັງແຕ່ນັ້ນ ທ້າວຫຼ້າ
ແສນໄຕ ລູກພຣະໄຊຍະຈັກກະພັດດີ ກໍໄດ້ສເວີຍຣາດ ເປັນພຍາແທນ
ພໍ່ຕົນ ແລ້ວກໍຣູ້ວ່າ ພຣະບາງເຈົ້ານີ້ ສະອາດໃຫ້ແລ້ວ ຍັງຄຳມັກຄຳ
ປາຖນາ ແຫ່ງຄົນທັງຫຼາຍນັ້ນ ພໍ່ຕົນໃຫ້ໄປຣາທນາມາ ເພື່ອຈັກໄຫວ້-
ນົບ ໂຄຣົບບູຊາ ລັກສາ ກໍໄດ້ສເວີຍຣາດແທນພຍາ ແທນພໍ່ຕົນ ແລ້ວ
ທ້າວສິເພຊະຣາດກຸມມານ ລູກພຍາ ໄຊຍະຈັກກະພັດ ເກີດມາໄດ້ ໓໔
ປີ ກໍຈື່ງ ໄດ້ສເວີຍຣາດ ເປັນພຍາ ອຸພິເສກຣາດ ພຣະນາມວ່າວິຊຸນ
ລະຣາດທານີ ສີສັດຕະນາຄະນາຫຸດ ປະວຸດຕິ ເຫດວ່າເອົາປະວຸດຕິນີ

໑໐



ນິດ ເມື່ອຂະນານມຸດທາພິເສກນັ້ນ ສາຍຟ້າແມ່ເມືອງເຣືອງຮູ່ງໃນ
ອາກາດທັງມວນ ແມ່ອີນທາທຸ ກໍພາຍອາກາດຢູ່ຕັ້ນ ປາກົດແກ່ຄົນທັງ
ຫຼາຍ ເມື່ອນັ້ນ ເມື່ອນັ້ນ ພຣະວິຊຸນລະຣາດ ສເວີຍສີສົມປັດຕິ ກໍເລົ່າ
ຣ່ຳເພິງ ຄິດເຖິງສົມພານ ພຣະບາງເຈົ້າວ່າ ກ່ອນອັສຈັນມາກັໜ້າ ກໍ
ປະລົງໃຈສ້າງ ມະຫາວິຫານຫຼັງນື່ງແລ້ວ ດ້ວຍທິພສົມບັດ ສົມອັນພິຈິດ
ດ້ວຍຮູບລາຍດອກທັງມວນ ຄວນອັສຈັນຍິ່ງໜັກ ໃນປີເຕົ່າສັນເດືອນວິສາ
ຂາອອກ ໑໔ ຄ່ຳ ວັນເສົາ ນັກຂັດຕະຣິກເຄິດ ໑໑ ຕົວຊື່ວ່າ ບົວລະພະ
ພລະຄູນນີ້ ມີຣວາຍພິຍາມພາດ ລົ້ນມີເຈົ້າສັງກາດໄດ້ ໘໗໔ ຕົວ. ຄົນ
ວ່າສ້າງແລ້ວບໍ່ຣະບອນຄວນ. ຈຶ່ງຣາທນາພຣະບາງເຈົ້າ ແຕ່ວັດມະໂນ
ຣົມ ມາປະດິດສະຖານໄວ້ ໃນວິຊຸນລະມະຫາວິຫານ. ແລ້ວທ່ານກໍແຕ່ງ
ເຄື່ອງ ສັກກາຣະບູຊາທັງມວນແລ້ວ ດ້ວຍສຸວັນນະຣາຊຜະສັດຕະຣະນະ
ພິຈິດແລ້ວ ອາຣາສີກກະທັງຫຼາຍ ພາຍນອກຊາວຄົນແລ້ວ. ຣາຊສົມ
ມາຄາມມະເຂດທັງຫຼາຍ ພາຍນອກ. ອັນຈະຕຸປັດໄຈຍະທັງສີ່ ປະການ
ຖວາຍບູຊາພຣະບາງເຈົ້າ ເປັນເຄົ້າ ເປັນປະທານ ໄປຕາບຕໍ່ເທົ້າ-
ເຖິງພຸທສາສນາ ນິມິດດີແທ້. ສ່ວນວ່າວິຊຸນມະຣາດ ສເວີຍສົມປັດຕິນັ້ນ
ປະມານວ່າໄດ້ ໔໐ ວັດສາ ແຕ່ສັງກາດໄດ້ ໗໔໑ ຕົວ ເດືອນ ໗
ຂຶ້ນ ໑໔ ຄ່ຳ ວັນທິດ ພຣະແສນຫຼວງສຸຣິນທາ ວັດສາມີປະສາທະສະ
ທາກໍອາກາດຢາດນ້ຳ ໃຫ້ເມື່ນຕາງເມືອງ ຊອນກັບລູກບ່າວຂອຍຄົນຜູ້
ຊຸມທັງມວນ ປະສາດໃຫ້ເປັນທານ ແກ່ລົ້ນເດັດມະຫາສັງຕະຣາຊາທັນ

ມະຣາໂສເຈົ້າ ຕາບຕໍ່ເທົ້າ ໕໐໐໐ ວັດສາ ໃນເມື່ອສັງກາດໄດ້ ໗໕ ຕົວ ເດືອນ ໑໑ ແຮມ ໔ ຄ່ຳ ວັນພຣະຫັດຣິກ ຈື່ວ່າ ປຸດສາຍະລົນ ເດັດມະຫາສັງຄະຣາຊາເຈົ້າ ເທັນອັສຈັນທັມມະພາຍໜ້າ ກໍຈຶ່ງປາສາດ ທີໃຫ້ເພີ່ນຕາງ ເມືອງຊອນກັບລູກຂຸນ ຂອຍຄົນຜູ້ຊຸມທັງມວນຜູ້ງນັ້ນ ໄວ້ ກັບທໍ່ພຣະບາງເຈົ້າ ໃນອາຣາມເມືອງຫຼວງຣາຊະອານິ້ງ ປະສິດທິ-ເຫຼັກ ລົງໄວ້ໃນຫຼາບທອງ ເປັນຜ້າສິຕາບຕໍ່ເທົ້າ ໕໐໐໐ ວັດສາມະຫາສັງຄະຣາຊາສັງຄະໂລກ ມະຫາສັງຄະຣາຊາທົວຂອງ ມະຫາສັງຄະຣາຊາສາມິ ໄພມະຫາທັມມະເສນາ ເພີ່ນຊ້າງເປັນປະທານ ແສນມັນທາ ອາມາດ ແລະເພີ່ນແສນເມືອງເລັກ ກວນຊາຍເກົ້າເພີ່ນທໍ່ສຸຣິນທະພະສັງຄະເຈົ້າ ຕົນໄດກໍດີ ທ້າວພຍາແສນເພີ່ນ ນ້ອຍໃຫຍ່ຜູ້ໃດກໍດີ ຢ່າໄດ້ມ້າງກອງທານອັນມີເສັງ ບຸຄລະຜູ້ໃດ ຫາກຍັງມ້າງກອງທານມີເສັງ ໃຫ້ຂາດເສັງດັ່ງນັ້ນ ໃຫ້ມັນຜູ້ນັ້ນໄດ້ທົງໃນອຸບາຍ ທັງ ໔ ເປັນດັ່ງເທວະທັດນັ້ນເທີ້ນ ຊາດມາໄດ ໕໕ ປີ ກໍມີອະນິດຈະກັມນິມິດປົກຕົນມິດ ປາກົດແລ້ວ ລວດເມືອສເວີຍສຸຄຕິວິມານພູ້ມ ໃນປີ ກົດສີ ສັງກາດໄດ້ ໘໘໔ ຕົວນັ້ນ ທັດນັ້ນ ພຣະໂພທິສາລະຣາດກຸມມານ ລູກ-ພຣະຊິຊຸມມະຣາດ ເກີດມາໄດ້ ໑໕ ປີ ເຈົ້າກໍໄດ້ສເວີຍຣາຊສົມປັດຕິ ເປັນພຍາແທນພໍ່ຕົນນັ້ນ ປະມານວ່າໄດ້ ໗ ຂວບ ເຂົາເຈົ້າກໍປະກອບດ້ວຍ ຕົກຂະປັນຍາ ກັມມະກັດຕາຍະນະ ກໍຣໍ່ເພີງດູຍັງຄູນ ແລະໂທດ ໃນກັມສອງປະການ ຄືກຸສລະກັມ ອະກຸສລະກັມອັນກະທຳຍັນຍະພອກຜົ



ພໍ່ຜີແມ່ ຜີແຖນທັງຫຼາຍ ວ່າເປັນໂທດໜັກແລ້ວເຈົ້າກໍມານັກໄຄ່ໃຫ້ເປັນປະໂຍຊນະ ເປັນຄຸນແກ່ຄົນທັງຫຼາຍ ຈຶ່ງໃຫ້ມ້າງໃຫ້ຣິດເສັງຍັງມິດສາທິດຖິ ຜີເຮືອນທັງຜີເສື້ອອັນຢູ່ເຮືອນກວນຂັນແຖນທັງມວນ ກໍຈຶ່ງຕັ້ງມະຫາວິຫານຫຼັງນຶ່ງໃນວຽງຊຽງດົງ ເປັນທີ່ທົ່ງພຣະພຸທສາສນາ ໃນປີເມືອງໄຄພຸທສັງກາດໄດ້ ໘໘໙ ຕົວນັ້ນດ້ວຍແທ້ປາງພຣະໂພທິສາລະຣາດເຈົ້າ ຈຶ່ງໃຫ້ແບ່ງເສດຕະສັດເງິນ ໓໐໐໐໐໐ ບາດເງິນລູກນຶ່ງພາຊະນະ-ຖວາຍແຖນພ້ອມໄປບູຊາພຣະບາງເຈົ້າທັ້ນ ເຈົ້າກໍສເວີຍຣາຊສົມປັດຕິ ດ້ວຍທັດສະພິທັມມະໂນປະມານວ່າໄດ້ ໘໗ ວັດສາຕາແຕ່ຊາດມາໄດ້ທ້າ ສິບສອງປີ ກໍມີອານິດຈະທັມມະກັມມາເຖິງທ່ານໃນປີເມືອງມົດ ສັງກາດໄດ້ ໙໐໙ ຕົວນັ້ນຖັດນັ້ນພຣະໄຊຍະເສດຖາທິຣາດຕົນເປັນລູກ ພຣະໂພທິສາລະຣາດແຕ່ເກີດມາໄດ້ ໑໕ ປີເຂົາກໍໄດ້ສເວີຍຣາດເປັນພຍາແທນພໍ່ຕົນແລ້ວກໍໃຫ້ແບ່ງກະໂຈມທົວຄຳອອກນຶ່ງ ປະດັບດ້ວຍແກ້ວແຫວນມາກໜັກ ບູຊາພຣະບາງເຈົ້າປະການນຶ່ງເຈົ້າກໍສ້າງຊຽງທອງ ທີ່ເປັນຣາຊມູນທຽນໃຫ້ສ້າງມະຫາວິຫານສະຖານທີ່ທົ່ງພຣະຣັຕນະໄຕແກ້ວທັງສາມ ໃນປີກາບໃຈ້ ສັງກາດໄດ້ ໙໘໓ ຕົວນັ້ນແລ້ວກໍໜີໄປສ້າງຈັນທະບູຣີຣາຊທານີ້ທັ້ນແລ ເມື່ອນັ້ນພຍາໄຊຍະເສດຖາທິຣາດ ໄປຢູ່ຈັນທະບູຣີກໍເລົ່າ ກໍມາຫາເຈດີລູກນຶ່ງພແມ່ປູຣະນະວັດຖຸ ອັນພຍາສີທັມມະກາໂສກະຣາດ ຫາກໃຫ້ແປງແຕ່ກ່ອນນັ້ນ ກໍມານິມິດ ສະປາຣະມິກຸດີ ມີ ທັດ ລອນພຣະມະຫາທາດ ລູກນັ້ນ ແລ້ວກໍ ສລະເຂົ້າຂອງ ກອງແກ້ວ ຖວາຍ...

ບູຊາພຣະສາຣີຣະກະ ທາດລູກນັ້ນ ໃນທີ່ນັ້ນມາກພາ ບໍ່ອາດຈັກອ່ານຈັກ
ນັບໄດ້ດີຫຼື ສ່ວນວ່າພຍາໄຊຍະເສດຖາທິຣາດ ນັ່ງຢູ່ສເວີຍລືສັມປັດຕິວ່າ
ໄດ້ ໘໔ ວັດສາຕາ ແຕ່ຊາດມາໄດ້ ໓໘ ກໍລວດເຖິງອະນິດຈະກັມໄປ
ຕາມກັມທ່ານ ໃນປີຣວງນົດ ສັງກາດໄດ້ ໙໓໓ ຕົນນັ້ນ ອະປະຣະນິດ
ທາ ກໍມີຖິຕັງ... ອີນັງພຸທພິຖະຣູບ ປະກາຍະມານະຊານີຕະພັງ ປາ
ທະຕະລະໂຕ ປະຖາຍະຍາວະມະລາ ເກສາປະຣິຍັນຕັງ ຈະຕຸອິທະຖິ-
ປະມານັງ ຕະໂຕ ເກສາປະຣິຍັນຕັງ ໂຕຍາວະໂນຣິຣັງ ສະຍາສັດຕະ
ອະຄຸງລີ ປະມານັງໂທຕິ ອີນັງພຸທພິຖາຄູຣຸກປະມານັງ ຊານີຕະພັງປັນ
ຈະຊະຕາທີກັງ ຈະຕຸທັດສະທະທີການິຈັດຕາ ປາສາທະ ໂອກາດໄວ້ກັບ
ວິຊຸນລະມະຫາວິຫານ ດັ່ງນີ້ ເມື່ອຈຸນສັງກາດໄດ້ ໓໗໔ ຕົວປີເຕົ່າສັນ-
ເດືອນວິສາຂາອອກ ໑໔ ຄ່ຳ ວັນເສົາ ນັກຂັດຕະລຶກ ກົດ ໑໑ ຕົວ ມື
ຣວາຍຍື່ ຍາມກາດລົ້ນມື້ເຊົ້າ ພຣະວິຊຸນລະຣາດເຈົ້າ ປະກອບດ້ວຍ-
ກຸສລະເຈຕະນາ ລັກສາສາສນາພຣະພຸທເຈົ້າ ຈຶ່ງມາສ້າງວິຊູນລະມະ-
ຫາວິຫານ ສະຖານທີ່ນີ້ ເພື່ອໃຫ້ເປັນຖາວອນໄປ ຕາບຕໍ່ເທົ້າ ໕໐໐໐
ວັດສາ ແລະ ໃຫ້ເປັນທີ່ເພິ່ງ ແກ່ບໍຣິສັດທັງຫຼາຍ ຜີວ່າຜູ້ໃດຜິດອາດຍາ
ຄວນຂ້າກໍດີ ຄວນໃສ່ຄາແຂນກໍດີ ໃສ່ຄີ້ພາຄາພັກກໍດີ ຄວນໃສ່ຄອກຂັງ
ກັ້ນກໍດີ ຄວນເສັງພີ່ເງິນ ພັນຄຳຮ້ອຍກໍດີ ພາຍເຂົ້າມາເພິ່ງວິຊູນລະ
ມະຫາວິຫານຫຼວງກໍດີທີ່ນີ້ ມາຕາບາດຍຳໃນເຂດບາດນີ້ງ ຍັງນອກເຂດ
ກໍດີ ໃຜຢ່າໄດ້ກະທຳຕາມໂທດ ອັນນັ້ນທ້ອນ ທີ່ໃຫ້ແຕ່ງເຄືອງ -



ສົມມາ ແກ່ພຣະຣັຕນະໄຕເຈົ້າ ແລ້ວເອົາອອກມາຫາວຽກຫາການລາວ
ຄົນເປັນຂ້ອຍກໍໃຫ້ເປັນຂ້ອຍ ລາວຄົນເປັນໄພ່ກໍໃຫ້ເປັນໄພ່ ດັ່ງເກົ່າ-
ເທີ້ນ ອານິສົງພລະຜູ້ງນີ້ ຈົ່ງໃຫ້ໄປຮອດໄປເຖິງ ພໍ່ແມ່ປູ່ຍ່າຕາຍາຍ ຜູ້
ແກ່ ພີ່ບ້ານແມ່ເມືອງພູ້ນ ຕາບຕໍ່ເທົ້າເຖິງຕົນກູ ຜູ້ສ້າງວິຫານນີ້ ລູກເຕົ້າ
ຫຼານເຫຼັນ ຜູ້ງຈັກສືບ ປະເພນີໄປຕາບຕໍ່ເທົ້າ ໕໐໐໐ ວັດສາ ຕາບໃດ
ກູໄດ້ໄປເຖິງຍັງນີຣະພານ ຍັງທິວຣະຫຽວລົງສານນີ້ ຂໍໃຫ້ປາສຈາກກັມ
ເວນທັງມວນ ເມື່ອໃດ ພຣະເມດໄຕຍະເຈົ້າ ໂພທິສັດລົງມາ ຕັດສັບ-
ພະຍຸຕົ້ນຍານ ຂໍໃຫ້ຜູ້ຂ້າໄດ້ເກີດມາຮ່ວມວັນ ພຣະພຸທເຈົ້າອົງນັ້ນ ແລ້ວ
ຂໍໃຫ້ໄດ້ເຖິງອໍຣະຫັນຕະ ນັກຄະຍານປະຕິສະນິດສະທານ ໃນສຳນັກ-
ພຣະເມດໄຕຍະເຈົ້າ ຕົນນັ້ນເທີລ້ອນເທີ້ນ ຄັນວ່າ ເຈົ້າໂອກາດປາດ
ນ້ຳພາຍທານດັ່ງນີ້ແລ້ວ ກໍກົດພາຍລາພຣະສົມມາ ຄານະເຂດອາຣາມີ
ກະທັງຫຼາຍ ໄວ້ດັ່ງນີ້ ເຂດວັດ ເອົາແຕ່ສົມມະແຈກຳແພງເບື້ອງຕາວັນ
ອອກ ລົງໄປລົບຫ້ວຍຊ້າງ ຢ່ານຂຶ້ນເມືອດ້ອຍຣິມຄານ ຮອດຜາບັ່ງທ່າ
ຄວາຍ ແລ້ວຂຶ້ນເມືອຮອດດອນຫຼວງ ຮອດຮ່ອງພອງ ລົງເມືອ ອຸໂປ
ສົດນ້ອຍຮອດແຈກຳແພງ ທ້າຍວັດ ເບື້ອງຕາວັນຕົກນັ້ນ ໄວ້ເປັນເຂດ
ວິຊຸນລະມະຫາວິຫານ ແຕ່ແຈກຳແພງທ້າຍວັດ ເບື້ອງຕາວັນຕົກກ້ຽວ
ເມືອທາງ ອຸປະໄພຍະ ແລ້ວຂຶ້ນມາຮອດສົບຫ້ວຍຊ້າງ ຍ້ານນັ້ນໄວ້-
ເປັນເຂດ ມະຫາເຈດີຍະອາຣາມ ກູເອົາຂ້ອຍ ໄວ້ກັບວັດວິຊູນ ໘໐
ຕົນ . ໃຫ້ທານຊ້າງ ພຣະຊຽງທອງ ເປັນຊຽງທອງ ເປັນ....

ພັດວັດ ຣັກສາພຣະອວນກູທັງມວນນີ້ ຢ່າໃຫ້ຫຼາໃຫ້ຄ້າເສັຽຈັກອັນເທີ້ມ
ນ້ຳບໍວບານໃວ້ໃຫ້ເປັນນ້ຳວິຊຸນ ໃຫ້ໄຫວ້ວັດ ເກັບເປັນອຸປະການ ແກ່
ພຣະພຸທເຈົ້າທັງມວນ ໃຫ້ເປັນເຂົ້າກິນ ຕ່ອນພ້າຕີນພູຊອງ ໄວ້ໃຫ້ເປັນ
ຂ້ອຍ ວັດວິຊຸນ ເຣັດໄຮ່ກິນເມືອງ ພ້ານ້ອຍເຂົ້າງວດ ໕໐ ຖວດແລະ
໕ ພັນ ເປັນເຂົ້າບູຊາ ພຣະເຈົ້າເມືອງຫາກຄານ ເຂົ້າຖວດຮ້ອຍເຄິ່ງ
ນຶ່ງມາ ເປັນເຂົ້າອູປະການບ້ານນອດ ເຂົ້າຖວດ ໕໐ ເຄິ່ງ ເບັ້ຽພັນ
໕໐໐໐ ມາເປັນອຸປະການ ບ້ານຖົ່ນຄຳແດງ ມີຖວດພາກ ໑໐ ມັດ ບູ
ຊາພຣະ ເຈົ້າຮ້ານບຸນພ້າຂາວສັງບູນ ມີ໐ ເກິ່ງ ສູ່ປີໄວ້ຢູດຢາດ ວັດ
ບ້ານໂພນທອງ ມີຖວດສາດຫຼວງ ມາປູພື້ນວັດວິຊຸນສູ່ປີ ໃຫ້ທ່ານກວາດ
ວັດ ຖືຂ້ອຍວັດໄພ່ວັດມາ ຢູ່ຮັກສາວັດທຸກວັນທຸກຄືນ ສເມີ້ດັ່ງຂ້ອຍເຍັຽ
ຮັກສາເຍັຽເສົາທອງນັ້ນແທ້ດີ້ ໃຜຢ່ານາງຢ່າຣິດຮ້ອຍມີກູເສັຽ ວັດຍັງ
ແຕກຍັງເພງທີ່ໃດ ກໍໃຫ້ຍິດໃຫ້ຢາ ເອົາທ່ອນມາລູນເອົາຊູນມາໃພ້ໃດ
ກໍດີ ຢ່າໄດ້ເອົາຂ້ອຍວັດຜູ້ງນີ້ໄປທີ່ໃດ ຢ່າເອົາໄປລາກໄມ້ຂື່ ແກ່ໄມ້ຂື່
ຊຽງ ຢ່າເອົາໃບແບ່ງສນາມພ້ານໃຫຍ ບຸກຄະລະຜູ້ໃດຍັງນ້າງຣາຊ-
ອາດຍາ ສະຫາແທ່ງກູເຍື້ອງນີ້ເສັຽ ໃຫ້ມັ່ນຜູ້ນັ້ນ ໄປໄພ້ໃນອະບາຍທັງ
ສີ່ ສເວີຍທຸກຂະເວທນາ ເປັນດັ່ງເທວະທັດນັ້ນເທີ້ນ ປະການນຶ່ງເມື່ອ
ຈຸນສັງກາດໄດ້ ໗໔ ຕົວ ເດືອນ ໑໒ ຂື້ນ ໑໕ ຄ່ຳ ວັນ ໑ ຫຼິກດີ
ກາພຣະແທ່ນເຈົ້າ ໃຫ້ທານບ້ານຖົ່ນກາງ ຢູ່ຖິ່ນເມືອງເຄິ່ງໄຕ້ ມີພາກ
ຖວດ ນັດນຶ່ງ ເຂົ້າສານ ພັນນຶ່ງ ໄວ້ກັບກາງຄະດີ ພຣະມະຫາສັງ



ຄະຣາຊາເຈົ້າ ວິຊຸນລະມະຫາວິຫານ ຕາບຕໍ່ເທົ້າ ໕໐໐໐ ວັດສາທ້າວ
ມາລູນ ມາໃພ່ ໃຜຢ່າໄດ້ຄິກຖອດໄດ້ ຍັງທານວັດຖຸ ແທ່ງກູເທີ້ນ ອົດ
ສະລິສີສວັດດີ ນະມັດສະ ໂດຍພຣະບໍວຣະບາດ ໄຕຍະຣັດຕະນາດ-
ແກ້ວ ມີ ປະການ ທັງອໍວຣະພາ ຈາຣິດຜູ້ສລາດແຈ້ງ ສາຕາບູຣານ
ຍັງນິທານ ຕຳນານອັນນີ້ ເຮົາຈັກກ່າວເຖິງ ທ້າວຜູ້ນີ້ບູນ ແມ່ນຂຸນຄອນ
ຕົນອົງອາດ ຍິດຍິ່ງກ້ວາງ ອະນັນຕະ ຊື່ວ່າ ພຍາຈັນທະພັນດີ ທັດສະ
ພິທະຣາຊທັມມະ ເງິນຄຳເກີດມີມ່າກ ບູນທ້າວພາກ ແຕ່ງແປງໂສດ
ດູລາສັບປູຣິສາທັງຫຼາຍ ເມື່ອລິກາຍະມູນີເຈົ້າ ເຂົ້າສູ່ນິຣະພານ ໄປ
ໄດ້ ເຂດປະມານ ໒໐໐໐ ປີ ສ່ວນວ່າ ພຣະໄທຊາຍຜູ້ນຶ່ງ ຊື່ວ່າຈັນ
ທະກາມິດ ລ້ຽງຊີວິດດ້ວຍກັມ ອັນຂາຍພູ ຍັງມີວັນນຶ່ງ ທ່ານກໍຫາຍ
ພູ ມາຮອດ ກໍຈິ່ງມາຈອດແອ່ນອນ ໃນກຸດີມະຫາເຖຣະເຈົ້າ ບັງສະ
ກຸນ ຕົນວິເສດ ອິນຕະເທດຣະໂວ ມາຢູ່ເມືອງຖົ່ນນັ້ນ ຄັນທ່ານຈອດ
ນອນຄືນນຶ່ງ ກໍຫຼັບພົ້ນພໍ້ ມີສະຫາສົມນຽງສຽງ ອອກຕອງກອງເປັນປະ
ດຸດຈະດັ່ງສຽງ ດູຣິຍົນດົນຕີທັ່ນ ມະຫາເຖຣະເຈົ້າ ຈຶ່ງພິຈາຣະນາດູ
ຕຳນານ ພຣະກໍ່ຮູ້ແຈ້ງ ດ້ວຍປັນຍາແທ່ງຕົນວ່າ ຜູ້ນີ້ມັນທ່ຽງຈັກໄດ້ -
ເປັນທ້າວພຍາຕົນນຶ່ງ ໃນເມືອງຊວາ ປະກົດຕຳນານນິທານອັນເຈົ້າ
ຣັດສີ ທຳນວາຍທວາຍໄວ້ນັ້ນ ບໍ່ຢ່າ ຍາມນັ້ນມະຫາເຖຣະເຈົ້າຈັກປຸກ
ມັນໃຫ້ຕື່ນ ກິ່ງກອຍພູ້ມັນໃຫ້ທ້າວທັນມັນທັ້ນ ຍາມນັ້ນມັນກໍສະດຸ້ງຕື່ນທັນ
ຝັນມັນກໍມາເລົ່າຄວາມຝັນແທ່ງມັນວ່າ ຂ້າແກ່ເຈົ້າກູຂານອນຄືນນີ້ຝັນວ່າ

ເຈົ້າຣັດສີຕົນນຶ່ງ ມີຣົດທີ່ທະຍານມາແຕ່ອາກາດກາງຫາວ ກໍກົ້ງຍັງກອຍ
ພູ້ທ້າວ ທັບຍັງຕົນຜູ້ຂ້າດີຫຼີແທ້ ຍັງຈັກເປັນເຫດການສິ່ງໃດ ແກ່ຜູ້ຂ້ານີ້
ຈາ ຍາມນັ້ນ ມະຫາເຖຣະເຈົ້າ ກໍແກ້ຄວາມຝັນອັນນັ້ນ ເຫດຕົນທາກ
ໄດ້ກະທຳສິ່ງດຽວ ທີ່ກ່າວທຳນາຍທວາຍນ້ຳໜ້າວ່າດັ່ງນີ້ ດູລາອຸປະສົກ
ທ່ານຈັກໄດ້ເປັນທ້າວພຍາ ຕົນປະເສີດໃນເມືອງຊວາ ພາຍໜ້າພູ້ມທ່ຽງ
ແທ້ ບໍ່ສົງສັຍແລນາ ອຸປະສົກຈຶ່ງຂົນຂວາຍຫາເຣືອໄດ້ແລ້ວ ຊວນເອົາ
ພົນ້ອງມິດສະຫາຍ ຂຶ້ນເມືອກະທຳການ ດັ່ງເມືອຄ້າເມືອຂາຍນັ້ນຄັນວ່າ
ອຸປະສົກ ຂຶ້ນເມືອເຖິງເມືອງຊວາ ແຕ່ຜາຕັດແກ່ຕົງນາຍເມືອເພື່ອນັ້ນ-
ສົ່ງຖໍ່ອຸປະສົກ ຍັງຈັກຂາຍກອນຄຳອອກມາ ໔ ມື ມີ້ ທີ ຖ້າເພີ່ນດັ່ງນັ້ນ
ກໍດີ ອຸປະສົກ ຢ່າຮີບເອົາໃຫ້ບົບບອນ ນຳເສັງກອນ ຢ່າເອົາໃຫ້ຮອດ
ດ້ວຍ ອັນນຶ່ງຊື່ວ່າ ດອນຊາຍຄວາຍຣາ ຢູ່ຝາກນ້ຳແວງສິບຄານທັ້ນ ອຸປະ
ສົກ ຈຶ່ງຕັ້ງທັຣຣາຍຄາວຈອດຢູ່ທີ່ນັ້ນເທີ້ນ ເຫດດັ່ງນັ້ນ ກອນທີ່ນທັງມວນ
ໃນກອນຊາຍຄວາຍຣາ ແລະດອນຊາຍຄວາຍ ຝຸ່ນມີຫຼັກ ເມືອງທົວເມືອງ
ນັ້ນ ກໍຈັກເກີດເປັນຄຳພິດທັງມວນ ຄວນອັສຈັນມາກັໜກ ຈັກຕັ້ງຢູ່ບູຊາ-
ອຸປະສົກຊູ່ວັນຊູ່ຄືນ ຕາບຕໍ່ເທົ້າ ເຖິງ ໗ ວັນ ໗ ຄືນ ໗ ວັນ ໘ ວັນ
ນັ້ນ ອຸປະສົກຈຶ່ງໃຫ້ຄົນທັງຫຼາຍ ເກັບເອົາຄຳທັງມວນ ມາໄວ້ເປັນ -
ຣາຊສົມບັດຕິ ອຸປະສົກທັງມວນເທີ້ນ ເມື່ອນັ້ນ ຈັນທະພານິດ ໄດ້ຍິນຄຳ
ເພົ່າງ ມະຫາເຖຣະເຈົ້າ ທຳນານທວາຍ ໃຫ້ແກ່ຕົນສົມນີ້ ກໍຊຶ່ນຊື່ນ ຍິນດີ
ມາກັໜກ ຄັນຮູ່ງເຊົ້າວັນລູນ ຈັນທະພານິດ ຖື້ນ...



ໄປຂົນຂວາຍຫາເຣືອ ໄດ້ເຫຼັ້ມນຶ່ງ ແລ້ວກໍຊັກຊວນພີ່ນ້ອງ ສະຫາຍວ່າ
ຈັກເມືອຄ້າຮອດທີ່ເມືອງຊວາ ທີ່ເຂົາລືຊາ່ວ່າ ເງິນຄຳມີມາກັໜກເມື່ອ
ນັ້ນ ຜູ້ງເຂົາຈັກເປັນຂ້າວຖື່ນ ຍິນດີວ່າ ພວກຂ້ອຍຂໍຈັກເມືອເມືອງ-
ຊວາດອນເຈົ້າດີຫຼີ ເມື່ອນັ້ນ ເຂົາຈຶ່ງຂົນຂວາຍສິ່ງຂອງຄ່າ ຂົນໄປເຣືອ
ແລ້ວ ກໍເອົາກັນຂຶ້ນມາ ດ້ວຍລັບດັບວັນຄືນມາກັໜກ ຍັງມີວັນນຶ່ງເຂົາ
ຈຶ່ງຮອດເມືອງຊຽງຄານ ຄ່ຳແລ້ວ ເຂົາຈຶ່ງຈອດທີ່ທ່າວັດຊາຍເຣົາ-
ທັ້ນ ໃນຄືນນັ້ນ ຈັນທະພານິດເລົ່າຝັນ ກັນອາໂຈນມາກັນັກ ຄັນວ່າ
ນັ້ນຕື່ນເຊົ້າແລ້ວ ທ່ານກໍເມືອໄຫວ້ ມະຫາເຖຣະເຈົ້າ ວັດຊາຍເຈົ້າ
ນັ້ນ ເລົ່າຄວາມຝັນອັນນັ້ນ ແກ່ມະຫາເຖຣະເຈົ້າ ມະຫາເຖຣະເຈົ້າ
ຈັກແກ້ ຄວາມຝັນອັນນັ້ນ ຈຶ່ງກ່າວວ່າ ດູລາອຸປະສົກ ທ່ານຈົ່ງໄປເກັບ
ເອົາໝາກເຂືອ ທີ່ເປັນປັນຍາວິດທັ້ນ ມາກິນກັບປາແດກເສັງເທີ້ນ ຄັນ
ວ່າອຸປະສົກກິນແລ້ວ ຈົ່ງສະເກົ້າດຳຫົວເສັງ ກໍຈັກມີຊັຍໄປພາຍໜ້າກໍ-
ຈັກໄດ້ເຂົ້າສອງສົມບັດມາກັໜກນັ້ນ. ຄັນວ່າມະຫາເຖຣະເຈົ້າແກ້ຄວາມ
ຝັນດັ່ງນີ້ແລ້ວ ຈັນທະພານິດກໍແກ້ກະທຳຕາມມະຫາເຖຣະເຈົ້າທັ້ນເມື່ອ
ນັ້ນ ຈັນທະພານິດກໍຂຶ້ນມາດ້ວຍລຳດັບບ້ານເມືອງ ສຽງວັນແລະຄືນ-
ມາກັໜກແລ້ວ ກໍຈຶ່ງມາຮອດພູ້ຕັດແກ້ ຕົງນາຍຂຶ້ນມາຍາມນັ້ນແສນຖໍ່ຈັນ
ທະພານິດ ຈຶ່ງຄາບກອນຄຳອັນມາປາກິດແກ່ຄົນທັງຫຼາຍ. ເຈົ້າຈັນທະ
ພານິດກໍປາບບອນນ້ຳເສັງເລົ່າຖໍ່ຂຶ້ນມາຄາວນຶ່ງ ກໍຄາບຄຳອອກມາ-
ສອງທີສາມທີ ເຈົ້າຈັນທະພານິດກໍຂາຍບອນລົງນ້ຳເສັງ ຜູ້ງບ່າວເຣືອ

ທັງຫຼາຍກໍຕືອກວ່າ ເສັງດາຍເດ ຍາມນັ້ນ ເຈົ້າຈັນທະພານິດຈຶ່ງກ່າວ
ວ່າ ເຈົ້າທັງຫຼາຍຢ່າເສັງດາຍເທີ້ນ ເຮົາທາກຈັກໄດ້ພາຍໜ້າຟູນ-
ມາກກວ່ານີ້ ໝື່ນທີ່ແສນທີ່ເທົ່າທີ ເມື່ອນັ້ນ ບ່າວເຮືອທັງຫຼາຍ ກໍຍິນດີ-
ມາກໜັກ ເຂົາກໍ່ໃສ່ໃຈຂະຂື້ນມາ ຈຶ່ງຣອດດອນຊາຍຄວາຍຣາທັ້ນ ກໍ
ເອົາກັນເຊົາຢູ່ ແປງຕູບແປງທັບຣາວຄາວຈອດຢູ່ທັ້ນ ເມື່ອນັ້ນ ຍັງມີ-
ຊາຍນາຍບ້ານຜູ້ນຶ່ງ ແບກກ້ອນຫີນລົງ ເພື່ອຈັກຕີເອົາຂອງຄາວ ດັ່ງ
ນັ້ນ ຄົນວ່າ ຈັນທະພານິດຫຼືງເຫັນ ຈຶ່ງກ່າວວ່າ ດູລານາຍບ້ານ ທ່ານ
ຈັກແບກອັນນັ້ນມາສັງຈາ ຊາຍຜູ້ນັ້ນກ່າວວ່າ ຂອຍແບກມາຍັງກ້ອນຫີນ
ອັນນີ້ ເພື່ອວ່າຈັກຕີເອົາຂອງ ຄາດອນເຈົ້າທັງຫຼາຍດາຍ ເມື່ອນັ້ນຈັນ
ທະພານິດຈຶ່ງກ່າວວ່າ ອັນທ່ານແບກມານັ້ນຕັ້ງແມ່ນກ້ອນຄຳແດງແພງຄ່າ
ມາກໜັກເດ ເມື່ອນັ້ນຈຶ່ງປົງລົງຈາກບ່າ ດູກໍເຫັນເປັນກ້ອນຄຳແດງແທ້
ນັ້ນຈຶ່ງກ່າວວ່າ ອັນນີ້ທາກເກີດດ້ວຍບູນຍະສົມພານເຈົ້າກູດາຍ ຜູ້ຂາ-
ຖວາຍໄວ້ບູຊາ ເຈົ້າກູທ້ອນ ເຈົ້າກູຈັກກູ້ມາຜູ້ຂາເທົ່າໃດ ຜູ້ຂາກໍຈັກລັບ
ທານນຳເຈົ້າກູ ໃນຂນະນັ້ນ ຫີນໃນດອນຊາຍຄວາຍຣາແລວ ດອນຊາຍ
ຄວາຍຟູ່ມທັງມວນ ກໍຍັງເກີດເປັນຄຳພິດທັງມວນ ຄວນອັສຈັນມາກໜັກ
ກໍຕັ້ງຢູ່ບູຊາ ເຈົ້າຈັນທະພານິດ ປະມານ ໗ ວັນ ໗ ຄືນ ໃນເມື່ອວັນ
໗ ວັນ ໘ ນັ້ນ ເຈົ້າຈັນທະພານິດ ຈຶ່ງພິຈາຣະນາ ໃຫ້ຄົນທັງຫຼາຍ
ໄປເກັບຂົນມາກອງໄວ້ ເປັນຣາຊສົມບັດຕິ ແຫ່ງຕົນ ບໍ່ອາດຈັກຄົນ-
ລະນານັບໄດ້ .



ຄົນນະນານັບໄດ້. ແລ້ວເຈົ້າກໍແຈກປັນ ໃຫ້ຄົນທັງຫຼາຍ ກໍຍິນດີມາກໜັກ
ດ້ວຍບູນຍະສົມພານ ຂອງພຣະອົງ ເຂົາຈຶ່ງຈາກັນວ່າ ບູກຄະລະຜູ້ມີບູນ
ຍະສົມພານ ອັນເຫັນມາປາງນັ້ນ ປານດັ່ງເຈົ້າຕົນນີ້ ທາຍາກນັກໃນ-
ໂລກນີ້ແລ້ວ ບັດນີ້ ຄວນເຮົາທັງຫຼາຍ ອຸດສາຣາຊພິເສກ ເຈົ້າຕົນນີ້ໃຫ້
ເປັນທ້າວພຍາ ແກ່ເຮົາທັງຫຼາຍເທີ້ນ ເມື່ອນັ້ນ ເຂົາກໍພ້ອມກັນ ແລ້ວ
ຈຶ່ງເອົາເຈົ້າ ຈັນທະພານິດ ໃຫ້ນັ່ງເພືອກອງຄຳ ອັນເຂົານຳມານັ້ນແລ້ວ-
ກໍເບີກລາບາສີ ທິດສົງອົງເກດ ປົກສາຣາຊພິເສກ ໃຫ້ເປັນທ້າວພຍາ
ແກ່ຄົນທັງຫຼາຍ ພາຍຊື່ວ່າ ພຍາຈັນທະພານິດ ສະຖິດສຸວັນນະພູມກົມ
ຍາມນັ້ນ ເມື່ອນັ້ນ ຄົນທັງຫຼາຍ ຈຶ່ງເອົາກັນມາແຜ້ວຖາງ ປ່າທອງຫຼາງ
ທີ່ສົບທ້ອຍຄາຍທັ້ນ ແປງຣາຊມູນທຽນ ປາສາດທີ່ຢູ່ພຍາແລ້ວ ເຂົາຂຸດ
ເສົາໂລງ ເລົ່າຍັງໄດ້ແຜ່ນທອງ ຢູ່ໃນພື້ນແຜ່ນດິນທັ່ນນມາກໜັກ ເຫດ
ດັ່ງນັ້ນ ຄົນທັງຫຼາຍ ພາຍຊື່ວ່າ ໂລຫະປະສາດ ຕົ້ນສ້າງໂວຫານໄວ້ວ່າ
ໂຮງຊຽງທອງ ຕາມນິມິດສອງປະການນັ້ນ ດູລາສັບປູຣິສາ ທັງຫຼາຍ-
ພຍາຈັນທະພານິດ ກໍສົມຣິທິດ້ວຍເຂົ້າຂອງກອງແກ້ວ ມາກໜັກແລວພຍາ
ຕົນນັ້ນ ກໍຢູ່ສເວີຍສິສົມບັດຕິສົມບັດ ອັນຊອບປະກອບ ດ້ວຍທິດສະຣາຊ
ທັມ ມີທານນະສົມພາວະນາເປັນຕົ້ນ ແລະສັ່ງສອນປະຊານະຣັດທັງ
ຫຼາຍ ໃນເມືອງຊວາ ທີ່ເຊົ້າວັນນັ້ນ ທັ່ນນຣສົມສ້າງແປງ ເສົາອິນຂະ-
ຂິນຂີນແລ້ວ ແລະທຳນອຍທວາຍໄວ້ ໃນມະຫານະຄອນ ຣາຊທານີຊຽງ
ດົງຊຽງທອງໂດຍຣິດຄອງອັນຊອບ ປະກອບດ້ວຍທິສຣາຊທັມ ໑໐ ປະ-

ການ ມີທານະສົມພາວະນາເປັນຕົ້ນ ທີ່ແທ້ພາຍໜ້ານີ້ ຄົນທັງຫຼາຍຍ່ອມ
ຍໍຕົນເອງໂອດອ້າງ ກະທຳຍົດຍິ່ງກວ່າງ ບູຮານຍ່ອມຮູ້ຈາຣະຈາຕົນຮູ້
ຫຼັກຍິ່ງກວ່ານັກປາດ ບໍ່ປຸນປານຍ່ອມກະທຳກັນ ອັນສາທານໃນສາສນາ
ພູທເຈົ້າ ເຮັດໃຫ້ເສົາສເມນເຮົ້ງໄປປາງນັ້ນ ຊາວເຈົ້າອໍຣະຫັນຕາ
ຕົນນຶ່ງ ຊື່ວ່າ ປະສຸງກຸນຣະເຖຣະເຈົ້າ ຕົນນຶ່ງ ຈຶ່ງຮ່ຳເພິງດູເຫດອະ
ນາຄົດ ຈັກເປັນກັນສາໂທດຮ້າຍໃນສາສນາ ກາລະວິປະຣິຕະແຫ້ລວດ
ວ່າ ບໍ່ມີຄວນ ມະຫາເຖຣະເຈົ້າ ຈຶ່ງຈາຣະຈາຕໍ່ພຍາວ່າ ດູລາມະຫາ
ຣາດເຮີຍ ພາຍໜ້າພູ້ນ ຈັກປາກົດເປັນອະນິຈາ ສັງສານການເມືອງ
ຈັກເປັນກິຕິ ຍັງອະກຸດສລະ ຈັກເກີດມີມາກພັກ ແກ່ຄົນທັງຫຼາຍ ຈັກ
ເປັນກັນລະຫົນ ມີກອງເກີດທົ່ວທ້ອງປະຖະພີ ໃນຣາຊທານີກໍ່ຈັກເສົ້າ-
ສູນເສັ້ງ ແມ່ນສາສນາພຣະພຸທເຈົ້າກໍຈັກເປັນຮ້ອຍເສັ້ງ ເມື່ອນັ້ນພຍາ
ໄດ້ຍິນຄຳຄຶງໃຈວ່າ ກໍຊວນພຣະມະຫາເຖຣະເຈົ້າເອົາພຣະສີຣະກະ
ທາດພຣະພຸທເຈົ້າ ອັນມີວັນນະ ຝ ປະການຄືວ່າ ມະທັນຕະສຸວັນນະ
ວັນນາມະ ຊື່ວ່ານາປຸດຕິກາປະພະ ຊຸທະກາກະກຸນລະວັນນາໃສ່ໃນໂຜ
ໂກດແກ້ວ ໃສ່ໃນໂລກໂກດຄຳມະຫາເຖຣະເຈົ້າແລະພຍາ ກໍນຳເອົາ
ໂກດພຣະທາດເຈົ້າໄປຮອດຖ້ຳພູຊອງທັງສອງນັ້ນ ແລ້ວຍັງເສນາອາ-
ມາດທັງຫຼາຍກໍໃຫ້ຂົນໄປຍັງເຄື່ອງສັກກາຣະບູຊາ ແລະຣາຊສົມປັດຕິອັນ
ເກີດດ້ວຍບຸນຍະສົມທານແຫ່ງພຍານັ້ນມາກພັກບໍ່ອາດຈັກຄະນະນາໄດ້ກໍຢູ່
ກະທຳສັກກາຣະບູຊາພຣະທາດເຈົ້ານັ້ນປະມານ ໗ ວັນ ໗ ຄືນແລ້ວກໍຈຶ່ງ



ປະມານໄວ້ ໃນຖ້ຳທີ່ນັ້ນກັບສົມບັດທັງມວນມາກພັກ ດ້ວຍແສນໂກດໃສ່
ໄວ້ເຕັມໃນຖ້ຳ ແລ້ວກໍໃຫ້ອັດໃຫ້ຕັນໄວ້ດີແລ້ວ ດ້ວຍກ້ອນຫີນອັນໃຫຍ່-
ເພື່ອບໍ່ໃຫ້ເປັນສາທານ ເພື່ອຈັກໃຫ້ຜູ້ບູນຍະສົມພານ ໄດ້ອະທິຖານເອົາ
ອອກ ມາເລືອກສາສນາພຣະພຸທເຈົ້າ ເປັນດັ່ງພຍາສີທັມມະອະໂສກະ
ຣາດ ອັນຈັກເລືອກຍົກຍໍທັງສາສນາພຣະພຸທເຈົ້ານັ້ນ ກະທຳສັດຈະອະທິ
ຖານ ດ້ວຍບູນຍະສົມພານແຫ່ງທ່ານ ກໍຈຶ່ງໄດ້ພຣະສາຣີຣະກະທາດອັນ-
ພຍາອະຊາຕູ ທາກປັນຈຸໄວ້ນັ້ນ ເອົາອອກມາແລ້ວ ກະທຳເຈດີວິຫານ
ໄດ້ປະມານແປດໝື່ນສີ່ພັນຫຼັງ ທົ່ວຊົມພູທີບທັງມວນນັ້ນແລ້ວ ຄັນວ່າພຍາ
ຖະປະນາທາດໄວ້ແລ້ວ ດັ່ງນັ້ນ ກໍຈຶ່ງແບ່ງຮູບນິກລຽບກັນປາ ບໍ່ໄດ້-
ມາຊົບເຊົາເຫງົາ ເພື່ອວ່າຈັກໃຫ້ແກ້ເປດ ສາສນາບັນຫາ ໑໔ ປະ
ການ ມີນິທານນິກຍາງເປັນຕົ້ນ ຊື່ວ່າ ກິຍຸໂຊກ ເມື່ອຈັກແກ້ເປດສາ-
ສນາບັນຫາ ໑໔ ປະການນັ້ນ ເລົ່າໂສກພໍຈັກໂຈດດັ່ງນັ້ນ ເຮົາເພິ່ງ
ໂຖດນິກຍານດູວ່າດັ່ງນັ້ນ ດູລານິກຍາງເຮີຍ ດັ່ງລີ ສັງບໍ່ກອກນິກຍາງ
ວ່າ ປາບໍ່ບອນ ບໍ່ບອກດາຍ ປາເຮີຍດັ່ງລີສູ້ສັງບໍ່ບອນ ປາວ່າຫຽາໄຊ
ລີກນິກຫຽາໄຊດັ່ງລີ ສັງນາຮັກນັ້ນຈາ ຫຽາໄຊວ່າ ຮັກເພື່ອງົວຄວາຍ
ບໍ່ກັດ -໓- ງົວຄວາມເຮີຍ ເຫດດັ່ງລີສູ້ສັງບໍ່ກັດຫຽານັ້ນຈາ ງົວຄວາຍ
ວ່າ ກູບໍ່ກັດ ເຫດເຈົ້າກູຜູ້ໄວ້ບໍ່ປ່ອຍກູມາ -໔- ເຈົ້າງົວເຮີຍເຫດໃດ
ບໍ່ໄດ້ປ່ອຍງົວຄວາຍເດ ເຈົ້າງົວວ່າບໍ່ປ່ອຍ ເພື່ອວ່າກູບໍ່ຫັນໄດ້ກິນເຂົ້າ
ແສບຫ້ອງ ທ້ອງກູໜັກດາຍ -໕- ທ້ອງເຮີຍ ເຫດໃດມຶງແລມາແສບ-

ນັ້ນຈາ ທ່ອງວ່າເພື່ອເຂົ້າບໍ່ສຸກ - ໗ - ເຂົ້າເຣັຍ ເຫດໃດມິງບໍ່ສຸກ ນັ້ນຈາ ເຂົ້າວ່າບໍ່ສຸກ ເພື່ອວ່າໄຟບໍ່ລຸກດາຍ -໘- ໄຟເຣັຍເຫດໃດມິງ ບໍ່ລູກນັ້ນຈາ ກູບໍ່ລູກເພື່ອວ່າຟີນຊູ່ມດາຍ -໙- ຜີນເຣັຍເຫດໃດມິງມາ ຕົກລົມນັ້ນຈາ ຜີນວ່າກູຕົກ ເພາະວ່າກົບຂຽດຮ້ອງຫາກູດາຍ - ໑໐ - ກົບຂຽດເຣັຍ ເຫດໃດສູ້ສັ້ງຮ້ອງຈາ ກົບຂຽດຮ້ອງ ເພື່ອວ່າງູໄລ່ກິນ - ເຫດນິກຍາງຂື້ນມາຖາມຄວາມໂຈດ ຕົກແກ່ງູທັ້ນ ດ້ວຍແທ້ອາຈານເຈົ້າ ຜູ້ສລາດເປັນນັກປາດ ເຄີຍແກ້ເທສນາບັນຫາ ກໍວິຈັດຈະນາ ດ້ວຍປະຕິ ໂລມໃນ ໄຂແຕ່ບົດລົງໄດ ໒໔ ບັດນີ ດັ່ງນີ້ກອນແລວ ຊຸ້ມັນ ຄືເຈົ້າຊຸມ ຜູ້ໄທ່ຍ ເປັນພໍ່ເປັນແມ່ໄພ່ເມືອງນັ້ນ - ໑ - ໄລກັນນັ້ນ ຄືການອັນ- ບຽດບຽນ ໄພ່ຟ້າຂ້າໄທທັງຫຼາຍນັ້ນ-໒- ກົບຂຽດນັ້ນ ຄືໄດ້ໄພ່ນ້ອຍ- ຂ້ອຍກົບຂຽດກັບເມືອງ -໓- ຮ້ອງ ຄືໄພ່ຈົ້ມກ້ອງຕິຕຽນເຈົ້າຊູມນັ້ນ - ໔- ຜີນນັ້ນ ຄືການບ້ານການເມືອງທັງ ໕ ຕົກລົ່ມລົ້ມຄືເຈົ້າຊູມ ແຕ່ງ ວຽກບ້ານການເມືອງ ພົນປະມານແກ່ໄພ່ຟ້າຂ້າໄທນັ້ນ-໕- ພິນນັ້ນຄືຫົວ ໃຈ ແຕ່ງເຈົ້າຊູມທັງຫຼາຍຜູ້ງເປັນໄທຍນັ້ນ -໖-ຊູມນັ້ນຄືກົບເສບຜູ້ມັ້ນ ມັກຍາຍ ໄປພາລາທາທິນທາທັມບໍ່ໄດ້ - ໘ - ໄຟນັ້ນຄືສາສນາແກ້ວ- ທັງ ມີ ປະການ-໙- ບໍ່ລູກນັ້ນຄືຄົນທັງຫາຍ ບໍ່ປະຕິບັດຟັງຈຳສິນໃຫ້ທານ ກະທຳບູນ ເລີກຍົກຍໍສາສນາພຣະພຸທເຈົ້າ ໃຫ້ຮູ່ງເຮືອງນັ້ນ-໑໐-ເຂົ້າ ນັ້ນ ຄືອະມິດຕະທັມ ຄຳສອນພຣະພຸທເຈົ້ານັ້ນ -໑໑- ບໍ່ສຸກນັ້ນຄືຄົນທັງ ຫຼາຍ ປະຕິບັດຟັງທັມຈຳສິນພາວະນາ ໃຫ້ໄດ້ເຖິງທັມອັນຍິ່ງໝານັ້ນ...



໑໒- ທ້ອງນັ້ນ ຄືສະມຸໄທຍະຕັນຫາອັນມາກັໜກ ອັນເກີດໃນສັນຕະຣະ ແຫ່ງສັຕຕະໂລກທັງຫຼາຍນັ້ນ -໑໓ - ແສບນັ້ນ ຄືປະທັມນິຕັນຫາ ໂທ ສະມາກ ນິມານະອັນກາລະແຂງໃນສະມັດຣະ ແຫ່ງສັດຕະໂລກທັງ- ຫາຍນັ້ນ -໑໔ - ເຈົ້າງ້ວນັ້ນ ຄືຜີຟ້າຜີແຖນຜີມົດຜີໝົນ -໑໕- ບໍ່ແກ້ ໂຂະ ບໍ່ນັ້ນ ວິວາດຖ້ອຍຖຽງກັນ ເປັນສະຖັນຕະຣະ ກັບເກີດມີດັ່ງນັ້ນກໍດີ ຊູ ສີທັມມະຣາຊາຕັ້ງຈັກອາດສ້າງບ້ານແປງເມືອງ ໃຫ້ຮູ່ງເຮືອງທຸກແຫ່ງ ແຕ່ໃຫ້ຊອບຄອງທັມມະ ສັມມະນະກັບບວດ ຈົງພຣະນວດຊອບອີ່ນຍົກຍັງ ຈັກເກີດມາ ເລີກຍົກຍໍຍັງພຸທສາສນາ ໃຫ້ຮູ່ງເຮືອງທັງບ້ານທັງເມືອງ ໃຫ້ສຸກຂະສເນີດເກົາ ເລົາກໍຍັງຈັກມີດຫຼືດາຍ ເຫດດັ່ງນັ້ນອາຈານ- ເຈົ້າເລົາແກ້ ປີສນານິກຍາງນີ້ເປັນບັນຫາ ແຕ່ເຄົ້າເຖິງປາຍດ້ວຍໃນ ໄຂປະເສດ ອັນວ່າບໍ່ກອກນັ້ນ ເສດລວດວ່ານິກຍາງກອງປານນີ້ ລົ້ນກ ຍາງນັ້ນ ຄືຊາວເຈົ້ານັກບວດທັງຫຼາຍ -໑- ກອກນັ້ນ ຄືສູດຣຽນທັມມະ ເທສນາ ແກ່ບັນຫາຊອບສິກຂາບົດ ພຣະພຸທເຈົ້າເອງ -໒- ປານັ້ນຄື ທ້າວພຍາເສນາອາມາດທັງຫຼາຍນັ້ນ -໓- ບ້ອນບອກນັ້ນ ຄືວ່າຍົມດີ ມີສັດທາ ສັມມາຖິດຖິ ເລີກຍົກຍໍຍັງສາສນາ ພຣະພຸທເຈົ້າໃຫ້ຮູ່ງເຮືອງ - ໔ - ທຽານັ້ນ ຄືການລ້ຽງອັນທີ່ຊອບແຫ່ງຕົນນັ້ນ - ໕ - ບໍ່ຮກນັ້ນ ຄືສັມມາຊີວະ ອັນລ້ຽງຕົນດ້ວຍອັນຊອບທັມມະນັ້ນ -໖- ງົວນັ້ນ ຄືຄົນ ທັງຫຼາຍ ອັນເປັນພໍ່ບ້ານພໍ່ເຮືອນນັ້ນ - ໗ - ກັດນັ້ນ ຄືວ່າສັມມາທິດຖິ ມະສະທາທັມມະບຸນແຜວ ຖາງນິນທາງ ເມືອງຟ້າ ແລະນິລະພານນັ້ນ-

-໘- ເຈົ້າງົວນັ້ນ ຄືວ່າຜີຟ້າຜີແຖນ ຜີປ້າວຜີເຮືອນ ຄົນທັງຫຼາຍນັ້ນແລ
-໙- ປ່ອຍນັ້ນ ຄືທຸກບໍ່ທົ່ວກິນຄວາຍພອກ ຜົນນັ້ນເປັນບາບຊົ່ວຄົນທັງຫຼາຍ
-໑໐- ທອງນັ້ນ ຄືສະມຸທາຍະຕັນຫາ ອັນເກີດໃນສັນຕະແຫ່ງຄົນທັງຫຼາຍ
-໑໑- ບໍ່ແສບນັ້ນ ຄືປາປະທຳ ມິຕິນວ່າ ເທົ່າລະໂມທານະມາ ແຫ່ງສັດ
ທັງຫຼາຍ ໃຫ້ນ້ອຍໃຫ້ບາງນັ້ນ - ໑໒ -ເຂົ້ານັ້ນ ຄືອະມິດຕະທັມມະ ຄຳ
ສອນ ແຫ່ງພຣະພຸທເຈົ້າ - ໑໓ - ສຸກນັ້ນ ຄືວ່າຄົນທັງຫຼາຍປະຕິຕານ-
ທຳຄຳສອນພຣະພຸທເຈົ້າ ໃຫ້ໄດ້ເຖິງທັນອັນຍັງນັ້ນ-໑໔- ໄຟນັ້ນ ຄືສາ
ສນາແກ້ວ ມີ ປະການນັ້ນ -໑໕ - ລູກນັ້ນ ຄືຄົນທັງຫຼາຍມີສັດທາກະທຳ
ບຸນໃຫ້ທານ ຮັກສາສີນພາວະນາ ເລີກຍົກບໍ່ສາສນາ ໃຫ້ຮູ່ງເຮືອງນັ້ນ -
- ໑໖ - ຟືນນັ້ນ ຄືໃຈແຫ່ງສັດຕະໂລກທັງຫຼາຍ - ໑໗ - ໄຂ່ນັ້ນຄື -
ເສບສັບປູຣິສາເຈົ້າທັງຫຼາຍ ຜູ້ມີປັນຍານັ້ນ -໑໘ -ຜົມນັ້ນ ຄືວຽກບ້ານ
ການເມືອງ ທັງມວນນັ້ນ -໑໙- ຕົກຂອກຣະດູນັ້ນ ຄືທ້າວພຍາເຈົ້າຂູນ-
ທັງຫຼາຍ ແຕ່ງເລີງເຂີງຊອບ ແກ່ໄພ່ຟ້າຂ້າໄທນັ້ນ- ໒໐- ກົບຂຽດນັ້ນຄື
ໄດ້ໄພ່ຟ້າ ຂ້າໄທທັງຫຼາຍ - ໒໑ -ບໍ່ຮ້ອງນັ້ນ ຄືວ່າບໍ່ຈົມບໍ່ຟອງ ຕິຕຽນ
ເຈົ້າຂູນທັງຫຼາຍນັ້ນ - ໒໒ - ງູນັ້ນ ຄືທ້າວພຍາເສນາອາມາດຜູ້ງເປັນ
ໃຫຍ່ນັ້ນ - ໒໓ - ບໍ່ໄລ່ກິນກົບຂຽດນັ້ນ ຄືຮູ້ອົດກຸມາ ບໍ່ບຽດບຽນໄພ່ຟ້າ
ຂ້າທັງຫຼາຍ - ໒໔ - ໃນຍະເລົາໂສດ ອາຈານເຈົ້າທັງຫຼາຍ ຜູ້ງສລາດ
ຈັກແກ່ສາຍຕາປັດຕາ ອັນມີ ດ້ວຍສະມຸທາ ບາຍກັບກັນ ວ່າດັ່ງນີ້ ອັນວ່າ
ນິກາຍາງເຮີຍ ມັງສັງບໍ່ກອກນັ້ນ ຄືສົມມະນາພານເຈົ້າ ທັງຫຼາຍ....



ບໍ່ສູດບໍ່ຮຽນບໍ່ຂຽນທັມມະ ອັນຈັກເລີຍຍົກບໍ່ສາສນາ ພຣະພຸທເຈົ້າ ທັງ
ຫຼາຍ ຜູ້ງສລາດຈັກແກ້ໃຫ້ຮູ່ງເຮືອງນັ້ນ - ໑ -ອັນວ່າ ປາບໍ່ບອນບໍ່
ບອກນັ້ນ ຄືວ່າ ທ້າວພຍາເສນາອາມາດທັງຫຼາຍ ບໍ່ມີສັດທາເຫຼືອມໃສ
ໃນພຣະພຸທເຈົ້າ - ໒ - ຣົກນັ້ນ ຄືທ້າວພຍາຂຸນທັງຫຼາຍ ຖືມິດສາ
ທິດຖີຜີປ້າວຜີເຮືອນ ເອົາມືວຽກການບ້ານການເມືອງມາກັກ-ມີ-ອັນ
ວ່າງົວບໍ່ກັດຫຽ້າ ຄືວ່າຜີປ້າວຜີເຮືອນທັງຫຼາຍຄືວ່າມິດສາທິດຖີບໍ່ແຜ້ວ-
ຫົນທາງເມືອງຟ້າ-໓- ອັນວ່າເຈົ້າງົວບໍ່ປ່ອຍນັ້ນ ຄືທ້າວພຍາບໍ່ສົ່ງຣາຊ
ອາດຍາອານັດ ໃຫ້ຄົນທັງຫຼາຍເສບມິດສາທິດຖີຜີປ້າວຜີເຮືອນທັງຫຼາຍ
ເຂົາ-໔- ອັນວ່າແສບທອງນັ້ນ ຄືວ່າກິຍຸກອຸກຂະລຸກຂຳເຂືອກເກີດເປັນ
ເສືອໃນບ້ານເມືອງມາກ ກັບທັງໄພ່ໄພແລະຜີສູນຄົນທັງຫຼາຍ-໕- ເຂົ້າບໍ່
ສຸກນັ້ນ ຄືກັມມະວິບາກແຫ່ງຄົນທັງຫຼາຍ ໄປແກ່ບໍ່ບອນປາຖນາອັນໃດກໍ
ບໍ່ໄດ້ດັ່ງໃຈນັກນັ້ນ -໖- ອັນວ່າໄຟບໍ່ລຸກນັ້ນ ຄືວ່າເຈົ້າສັມມະນະພານ
ທັງຫຼາຍບໍ່ກະທຳ ເລີກຍົກບໍ່ສາສນາ ພຣະພຸທເຈົ້າ ໃຫ້ຮູ່ງເຮືອງນັ້ນ-
໗- ຟືນຊຸ່ມນັ້ນ ຄືຄົນທັງຫຼາຍ ຜູ້ໃຫຍ່ຜູ້ນ້ອຍ ໃຈອັນເປັນບາບມາກນັກ
ມັກເຮັດຄວາມແກ່ກັນມາກໜັກ ຜູ້ງເກົ່າກ່ອນກັນ ຂ້າຟັນກັນດີຫຼີ-໘-ອັນ
ວ່າຜົມຕົກລົ້ນລົ້ນ ຄືຊາວເຈົ້າຊື່ຊຽງຜູ້ງຮ້າຍ ບໍ່ສົງອອນຮັກສາສິກຂາ-
ບົດບໍ່ດີ ອັນພຣະພຸທເຈົ້າຕັ້ງໄວ້ນັ້ນ ລວດໃຫ້ສາສນາໝົ່ນໝອງ ບໍ່ຈຳ-
ເຣີນ ນຳຄຳສອນແຫ່ງພຣະພຸທເຈົ້ານັ້ນ- ໑໐ - ອັນວ່າ ກົບຂຽດຮ້ອງ
ນັ້ນ ຄືໄພ່ຟ້າຂ້າໄທທັງຫຼາຍ ຕາຍຢາກເຂົ້າ ຄາງໃຫ້ທຸກໄຮ້ໝອງໃຈ-

ນັ້ນ - ໑໑ - ອັນວ່າງູໄລ່ກິນກົບກິນຂຽດນັ້ນ ຄືວ່າ ທ້າວພຍາ ແລະ ເສນາອາມາດທັງຫຼາຍ ໂລພະຕັນຫາມາກພັກ ບຽດບຽນໄພ່ຟ້າຂ້າໄທ ດ້ວຍສ່ວຍໄຣ່ເຂົ້າ ງວດງາອາກອນພົນປະມານບໍ່ອິດກູມາ ໃນກາລະ- ເມື່ອຍາມຖ້ອຍຖ້ອຍພູ້ນ - ໑໒ - ຊາຕາບັນທາກັນເຍື່ອງນີ້ ພຍາຈັນ ທະພານິດ ໃຫ້ແຕ່ງແປ່ງໜັງສືນິທານ ສຳແດງໄວ້ກັບພຣະທາດເຈົ້າກັບ ເຂົ້າຂອງກອງສົມບັດ ອັນປະໄວ້ໃນພູຊອງນ້ອຍ ພູຊວງຫຼວງນັ້ນ ເມື່ອ ໄດ້ກິຍຸກເກີດມີແລ້ວ ໄປຫາຍເທວະດາທັງຫຼາຍ ຍັງບັງໄວ້ກ່ອນ ບໍ່ໃຫ້ ປາກົດ ເມື່ອໃດທ້າວຜູ້ມີບຸນຄູນ ພຍາທັມມະຣາຊເຈົ້າ ມາສເວີຍຣາດ ອາດຍົກຍໍສາສນາ ພຣະພຸທເຈົ້າໃຫ້ຮຸ່ງເຮືອງ ທັງບ້ານເມືອງກໍໃຫ້ ມີ ຄວາມສຸກຍາມໃດ ດັ່ງນັ້ນ ເທວະດາທັງຫຼາຍກໍແບ່ງມີກຍ່າງໄວ້ສຳ- ແດງ ເປັນສຳຄັນສາຍາ່ຮູບມີກຍາງນັ້ນ ໃຫ້ປາກົດແຈ້ງແກ່ຄົນທັງຫຼາຍ ກໍຈິ່ງໃຫ້ເອົາພຣະສາທິຣາດເຈົ້າ ກັບທັງເຂົ້າຂອງສົມບັດທັງມວນນັ້ນ- ເອົາອອກມານັ້ນ. ດູລາສັບປູຣິສາທັງຫຼາຍ ສ່ວນວ່າພຍາຈັນທະພານິດ ສເວີຍຣາຊສົມບັດ ດ້ວຍອັນປະກອບຊອບທົດສະທັມ ສຽງເຈັຽຣະການ ນານໄປ ຕາບຕໍ່ເທົ້າແດນອາຍຸສັງຂານແທ່ງຕົນແລ້ວ ກໍຈຸດຕິຈາກພາກ ຕາມຍະຖາກັມແທ່ງທານ ເມື່ອນັ້ນ ປຸດຕະເປັນພຍາປາຣິບຣາ ສືບວົງ ສາ ພຍາຈັນທະພານິດ ໄປຕາບຕໍ່ເທົ້າ ແທ່ງຊີວິດແທ່ງເຂົາ ເປັນ- ເທິງນານແລ້ວ ລວດເສົ້າສູນ ເສັຽວົງສາພຍາໃນຊຽງດົງ ຊຽງທອງ ນັ້ນ ເມື່ອນັ້ນ ລາວລ້ານຊ້າງທັງມວນ ລວດເກີດເປັນບັ້ນ ເປັນທ່ອນຢູ່



ຢູ່ຕາມຜູ້ຕ່າງເຂດ ເອົາເພດເປັນທ້າວພຍາ ລວດບໍ່ໄປສູ່ໄປຫາຜູ້ໃດ ເລົ່າ ແລະບູຣານມະຊາດເຊື້ອ ຈັນທະພານິດ ບູນຊູສົມຣິດທີສັກ ໃຫ້ ເປັນພຍາຍິດຍິ່ງ ທັງຣິດທິເຣືອງຮຸ່ງ ໄວແອລິທິດສາໄຕແຫຼ່ງຫຼ້າໂລກ ເຣືອງ ອັສຈັນນິທານເຈົ້າ ຈັນທະພານິດຊາ ກໍສະເດັດບໍຣະບອນ - ຄວນເທົ່ານີ້ ກ່ອນແລ....................

## ໜັງສືທີ່ພິມໃນຫໍສມຸດແຫ່ງຊາດ


໑ - ປະວັດຫໍສມຸດ

໒ - ບັນນານຸກົມແຫ່ງຊາດ

໓ - ສຶກສາໂດຍຕົນເອງ

໔ - ສຶກສາດ້ວຍປື້ມ

໕ - ສມາດສົງສານ

໖ - ທ້າວເຕົ່າ

໗ - ພຍາຄັນຄາກ

໘ - ລັດສີສິງ

໙ - ພຍາກຸສຣາດ

໑໐ - ຈັນສະມຸດ

໑໑ - ທ້າວກ່ຳພ້າເຕັນດ່ອນ

໑໒ - ພົງສາວະດານເມືອງພວນ

໑໓ - ທ້າວເຕົ່າຄຳ ( ກອນ )

໑໔ - ຊຽງນ້ອຍໂຈຣະໂຕ

໑໕ - ກົງເຈືອງຕານ

໑໖ - ພືນພຣະບາງ

-7. AUG. 1984
BMB/34/3121
no card